ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-08 ທັນວາ 2025
ປີທີ 14
ສະບັບທີ 1044
ລາຍສັບປະດາ

## ວາງສະແດງຮູບພາບ ຊີວິດ ແລະ ພາລະກິດ ປະຕິວັດ ຂອງປະທານ ໄກສອນ ພົມວິຫານ



(ສພຊ) - ພິທີເປີດງານວາງສະແດງຮູບພາບພາຍໃຕ້ຫົວຂໍ້ "ຜົນສຳເລັດການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຕິດພັນກັບຊີວິດແລະພາລະກິດປະຕິວັດຂອງປະທານ

ອ່ານຕໍ່ໜ້າ 11

## ການນຳພັກ-ລັດ ວາງພວງມາລາ ແລະ ກະຕ່າ ດອກໄມ້ ໂອກາດວັນຊາດ ຄົບຮອບ 50 ປີ



(ສພຊ) - ຕອນເຊົ້າວັນຈັນທີ 1 ທັນວານີ້, ການນຳພັກ-ລັດ ນຳໂດຍສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ໄດ້ເຂົ້າວາງພວງມາລາຢູ່ອະນຸສາວະລີນັກຮົບນິລະນາມ (ດາວແດງ) ແລະ ວາງກະຕ່າດອກໄມ້ຢູ່ຫໍພິພິທະພັນ ໄກສອນ ພົມວິຫານ ເນື່ອງໃນໂອກາດສະເຫຼີມສະຫຼອງວັນສະຖາປະນາ ສປປລາວ ຄົບຮອບ 50 ປີ(2/12/1975-2/12/2025) ເພື່ອເປັນການສະແດງເຖິງຄວາມເຄົາລົບຮັກ, ຄວາມກະຕັນຍູຮູ້ບຸນຄຸນເຖິງຄຸນງາມຄວາມດີ, ນ້ຳໃຈຕໍ່ສູ້ຢ່າງພິລະອາດຫານ ແລະ ບໍ່ຍອມຈຳນົນຂອງບັນພະບູລຸດລາວກໍຄືບັນດານັກຮົບປະຕິວັດຂອງລາວ ທີ່ເສຍສະຫຼະຊີວິດ, ເລືອດເນື້ອ ເພື່ອພາລະກິດປະຕິວັດ ຢ່າງອົງອາດກ້າຫານ ພາຍ

ອ່ານຕໍ່ໜ້າ 5

## ຜົນສຳເລັດກອງປະຊຸມຄົບຄະນະວິສາມັນ ຂອງຄະນະບໍລິຫານງານສູນກາງພັກ



(ສພຊ) - ກອງປະຊຸມຄົບຄະນະວິສາມັນຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ໄດ້ດຳເນີນມາແຕ່ວັນທີ 24-27 ພະຈິກ 2025 ແລະ ໄດ້ປິດລົງດ້ວຍຜົນສຳເລັດອັນຈົບງາມ ທີ່ສຳນັກງານສູນກາງພັກ ພາຍໃຕ້ການເປັນປະທານຂອງສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານ

ອ່ານຕໍ່ໜ້າ 7

## ປາຖະກະຖາວັນຊາດທີ 2 ທັນວາ, ວັນເກີດປະທານ ໄກສອນ ພົມວິຫານ ແລະ ປະດັບຫຼຽນກາລະນຶກ 50 ປີ ວັນສະຖາປະນາ ສປປລາວ



ອ່ານຕໍ່ໜ້າ 5



ແນວຄິດປະທານ

### ໄກສອນ ພົມວິຫານ

ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ພະນັກງານມີຄວາມສາມາດ ແຕ່ຖ້າບໍ່ມີຄຸນສົມບັດແລ້ວ ຄວາມສາມາດດັ່ງກ່າວ ກໍບໍ່ສາມາດເສີມຂະຫຍາຍໄປເຖິງຈຸດທີ່ໝາຍ ແລະ ຖືກຕ້ອງຕາມທິດທາງໄດ້. ພະນັກງານມີຄຸນສົມບັດ ແຕ່ຖ້າບໍ່ມີຄວາມສາມາດ ກໍບໍ່ອາດຈະມີການກະທຳອັນຖືກຕ້ອງ ຫຼື ກະທຳໄປກໍຈະບໍ່ມີປະສິດທິຜົນເລີຍ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 164)

ການຕີລາຄາພະນັກງານນັ້ນ ແມ່ນຕ້ອງເບິ່ງຄຸນສົມບັດ ເບິ່ງຄວາມສາມາດ, ແບບແຜນ ແລະ ລະດັບຂອງພະນັກງານ ທັງໃນປັດຈຸບັນ, ທັງໃນອະດີດ ແລະ ຄາດຄະເນເຖິງອະນາຄົດ, ແຕ່ຕົ້ນຕໍແມ່ນຕ້ອງອີງໃສ່ຄວາມສາມາດໃນການເຄື່ອນໄຫວຕົວຈິງ, ໝາກຜົນແຫ່ງການສຳເລັດໜ້າທີ່ ທີ່ໄດ້ຮັບມອບໝາຍ ແລະ ຄວາມອາດສາມາດບຸກບືນຂອງພະນັກງານຜູ້ນັ້ນ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 168-169)

ອ່ານຕໍ່ສະບັບໜ້າ




## ປະທານສະພາແຫ່ງຊາດ ພົບປະ ເລຂາທິການໃຫຍ່ພັກກອມມູນິດຫວຽດນາມ



ອ່ານຕໍ່ໜ້າ 11

50 ປີ ບົນເສັ້ນທາງເຕີບໃຫຍ່... (ໜ້າ 9)



ຫວຽດນາມ... (ໜ້າ 10)

ເຝົ້າເບິ່ງ ໄດ້ຍິນ ດຽວ ❖ ວິເສດ ສະແຫວງສຶກສາ

ເລື່ອງມະຍົກມະຍ່ອຍ... (ໜ້າ 12)

## ຊົມເຊີຍວັນຊາດທີ 2 ທັນວາ ຄົບຮອບ 50 ປີ (2/12/1975-2/12/2025) ຢ່າງສຸດໃຈ!

# ພິທີເປີດປຶ້ມ 50 ປີ ແຫ່ງການພົວພັນລະຫວ່າງ ສະພາແຫ່ງຊາດ ລາວ ແລະ ຫວຽດນາມ



(ສພຊ) - ຕອນບ່າຍວັນທີ 1 ທັນວາຜ່ານມາ ທີ່ສະພາແຫ່ງຊາດ ໄດ້ມີພິທີເປີດປຶ້ມ "50 ປີແຫ່ງການພົວພັນລະຫວ່າງສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດຫວຽດນາມ-ການຮ່ວມມືຮອບດ້ານແລະການພັດທະນາ (1975-2025)" ໂດຍການເຂົ້າຮ່ວມຂອງສະຫາຍ ໂຕເລີມ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ, ສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ພ້ອມດ້ວຍສະຫາຍຜູ້ແທນລາວ ແລະ ຫວຽດນາມເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ສະຫາຍສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ ກ່າວວ່າ: ປຶ້ມຫວັດສາດການພົວພັນລະຫວ່າງສອງສະພາແຫ່ງຊາດ ລາວ ແລະ ຫວຽດນາມເຫຼັ້ມນີ້ແມ່ນໝາກຜົນລວມແຫ່ງຄວາມພະຍາຍາມອັນໃຫຍ່ຫຼວງຂອງບັນດາການນຳສະພາແຫ່ງຊາດ, ພະນັກງານ, ພາກສ່ວນຕ່າງໆ ແລະ ນັກຄົ້ນຄວ້າ ຂອງສອງປະເທດ ລາວ-ຫວຽດນາມທີ່ໄດ້ຮ່ວມກັນລວບລວມການພົວພັນມິດຕະພາບ ແລະການຮ່ວມມືທີ່ເປັນມູນເຊື້ອມາເປັນເວລາອັນຍາວນານລະຫວ່າງ ສອງປະເທດ ແຕ່ສະໄໝຕໍ່ສູ້ກູ້ຊາດເພື່ອເອກະລາດແຫ່ງຊາດໃນເມື່ອກ່ອນ ກໍຄືໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃນປັດຈຸບັນຂອງສອງປະເທດ ເວົ້າລວມ, ກໍຄືສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດຫວຽດນາມ ເວົ້າສະເພາະ ເພື່ອເຮັດໃຫ້ນັກຮຽນຮູ້, ປັນຍາຊົນ ແລະ ປະຊາຊົນສອງປະເທດ ໄດ້ຄົ້ນຄວ້າ, ຮຽນຮູ້ປະຫວັດສາດການພົວພັນອັນດີງາມ ແລະ ມີໜຶ່ງດຽວໃນໂລກ ເຮັດໃຫ້ຄົນຮຸ່ນໃໝ່ຂອງທັງສອງປະເທດເຫັນໄດ້ຄວາມໝາຍຄວາມສຳຄັນຂອງການພົວພັນຮ່ວມມືລາວ-ຫວຽດນາມ ແລະ ສືບຕໍ່ຮັບຜິດຊອບໃນການປົກປັກຮັກສາ ແລະ ເພີ່ມພູນຄູນສ້າງມໍລະດົກອັນລ້ຳຄ່ານີ້ໄວ້ຕະຫຼອດການ.

ຈາກນັ້ນ, ສະຫາຍ ໂຕເລີມ, ສະຫາຍປອ. ໄຊສົມພອນ ພົມວິຫານ ພ້ອມດ້ວຍສະຫາຍ ສຈ. ປອ. ຈະເລີນ ເຢຍປາວເຮີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ແລະ ສະຫາຍ ນາງ ຫງວຽນ ທິ ແທັງ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ປະທານຄະນະມິດຕະພາບລັດຖະສະພາຫວຽດນາມ-ລາວ ໄດ້ພ້ອມກັນກົດປຸ່ມເປີດປຶ້ມຢ່າງເປັນທາງການ.

**(ນາງ ອາລິນ ສຸພົມມະປະດິດ)**

# ກອງປະຊຸມ ຄປຈສພຊ ປະຈຳເດືອນພະຈິກ




(ສພຊ) - ກອງປະຊຸມຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ປະຈຳເດືອນພະຈິກ 2025 ໄດ້ດຳເນີນໃນຕອນເຊົ້າວັນທີ 28 ພະຈິກນີ້ ໂດຍການເປັນປະທານຂອງທ່ານສຈ.ປອ. ຈະເລີນ ເຢຍປາວເຮີ ຮອງປະທານຄະນະປະຈຳສະພາແຫ່ງຊາດ; ມີບັນດາທ່ານຮອງປະທານ ແລະ ກຳມະການ ຄປຈສພຊ, ບັນດາທ່ານລັດຖະມົນຕີແລະຮອງລັດຖະມົນຕີກະຊວງ, ອົງການທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນແລະກົດໝາຍ ເປັນຕົ້ນ: ໜັງສືສະເໜີຂອງລັດຖະບານ ສະບັບເລກທີ 12/ລບ, ລົງວັນທີ 24 ພະຈິກ 2025 ສະເໜີພິຈາລະນາຮັບຮອງເອົາແລະຜ່ອນຜັນການຈັດຕັ້ງປະຕິບັດບາງມາດຕາຂອງກົດໝາຍທີ່ພົວພັນກັບໂຄງການພະລັງງານໄຟຟ້າແສງຕາເວັນ ຢູ່ເມືອງໄຊ ແລະ ເມືອງນາໝໍ້ ແຂວງອຸດົມໄຊ ຂອງບໍລິສັດ ຊີຈີເອັນ ລາວ ຈຳກັດຜູ້ດຽວ ແລະ ໜັງສືສະເໜີຂອງລັດຖະບານ ສະບັບເລກທີ 122/ລບ, ລົງວັນທີ 15 ຕຸລາ 2025 ທີ່ສະເໜີຂໍຫັນປ່ຽນປະເພດທີ່ດິນປ່າໄມ້ ເປັນທີ່ດິນປະເພດອື່ນລັກສະນະຖາວອນແລະລັກສະນະຊົ່ວຄາວ ທີ່ນອນຢູ່ໃນເຂດອຸທິຍານແຫ່ງຊາດ ດົງຫົວສາວ ແລະ ນອນໃນປ່າປ້ອງກັນແຫ່ງຊາດ ຍອດນ້ຳພູພຽງບໍລິເວນ ເພື່ອນຳໃຊ້ເຂົ້າໃນໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳພາກ ຢູ່ເມືອງປາກຊ່ອງ ແລະ ເມືອງປະທຸມພອນ ແຂວງຈຳປາສັກ ຂອງບໍລິສັດ ຈະເລີນເຊກອງພັດທະນາ ຈຳກັດ.

ຕອນສວາຍຂອງວັນດຽວກັນ, ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກຮອງປະທານຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມໄດ້ສືບຕໍ່ພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດ ເປັນຕົ້ນ: ລາຍງານຜົນການຄົ້ນຄວ້າໜັງສືສະເໜີຂອງລັດຖະບານ ກ່ຽວກັບການສະເໜີຂໍພິຈາລະນາຍົກເວັ້ນການປະຕິບັດບາງມາດຕາຂອງກົດໝາຍໃນມະຕິເພີ່ມຕື່ມຂອງຄະນະປະຈຳສະພາແຫ່ງຊາດທີ່ພົວພັນກັບໂຄງການເຂື່ອນໄຟຟ້າດອນສະໂຮງ ແລະ ລາຍງານຄືນຜົນການຄົ້ນຄວ້າໜັງສືສະເໜີຂອງລັດຖະບານ ກ່ຽວກັບການຂໍພິຈາລະນາອອກມະຕິຮັບຮອງເອົາສັນຍາໂອນຮຸ້ນ 60% ໃນໂຄງການເຂື່ອນໄຟຟ້ານ້ຳເທີນຫີນບູນ ຂອງບໍລິສັດໄຟຟ້າລາວ ໃຫ້ແກ່ກຸ່ມບໍລິສັດ ພົງຊັບທະວີ ຈຳກັດຜູ້ດຽວ.

**(ນາງ ອາລິນ ສຸພົມມະປະດິດ)**



# ເຝິກອົບຮົມເພື່ອຄວາມຮູ້ ແລະ ເຂົ້າໃຈ ພາລະບົດບາດ ສພຊ ແລະ ສພຂ




(ສພຂ) - ວັນທີ 24-27 ພະຈິກຜ່ານມາ ໄດ້ມີຈັດກອງປະຊຸມເຝິກອົບຮົມເພື່ອຄວາມຮັບຮູ້ ແລະ ເຂົ້າໃຈຕໍ່ພາລະບົດບາດຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ວຽກງານໂຄງປະກອບກົງຈັກການຈັດຕັ້ງ ແລະ ບຸກຄະລາກອນຂອງສະພາປະຊາຊົນຂັ້ນແຂວງ ແລະ ວຽກງານກະກຽມດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ໃຫ້ແກ່ເລຂາ-ຮອງເລຂາພັກແຂວງ-ເມືອງ, ປະທານຄະນະກຳມະການປົກຄອງແຂວງ-ເມືອງ, ສະມາຊິກສະພາແຫ່ງຊາດ (ສສຊ), ສະມາຊິກສະພາປະຊາຊົນແຂວງ (ສສຂ), ພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງ (ສພຂ) ແລະ ພາກສ່ວນທີ່ກ່ຽວຂ້ອງ ຢູ່ 3 ແຂວງຄື: ຈຳປາສັກ, ອັດຕະປື ແລະ ເຊກອງ ໂດຍການເປັນປະທານຮ່ວມຂອງທ່ານ ສຸບັນ ສະອະບຸດ ກຳມະການຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ), ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ແລະ ທ່ານປະທານສະພາປະຊາຊົນແຂວງ 3 ແຂວງດັ່ງກ່າວ.

ທັງນີ້, ກໍເພື່ອເຜີຍແຜ່, ໂຄສະນາກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ສພຊ ກໍຄື ສພຂ ແນໃສ່ສ້າງຄວາມຮັບຮູ້, ເຂົ້າໃຈຕໍ່ວຽກງານດັ່ງກ່າວ ໃຫ້ມີຄວາມເລິກເຊິ່ງ ທັງຊຸກຍູ້, ແນະນຳ ແລະ ສ້າງຄວາມເປັນເອກະພາບ ກ່ຽວກັບໂຄງປະກອບກົງຈັກການຈັດຕັ້ງ ແລະ ບຸກຄະລາກອນຂອງ ສພຂ, ການກະກຽມໃຫ້ແກ່ການດຳເນີນການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V ພ້ອມທັງເປັນຂໍ້ມູນ, ບ່ອນອີງໃຫ້ແກ່ການຄົ້ນຄວ້າ, ປັບປຸງກົງຈັກການຈັດຕັ້ງຂອງສະພາໃນຊຸດຕໍ່ໄປ ໃຫ້ເປັນລະບົບ, ມີຄວາມເປັນເອກະພາບ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ແລະ ຮັບປະກັນໃຫ້ແກ່ການເສີມຂະຫຍາຍ ແລະ ການຍົກສູງບົດບາດການນຳພາຂອງພັກ ເວົ້າລວມ, ເວົ້າສະເພາະການຍົກສູງບົດບາດຂອງສະພາ ໃຫ້ມີຄວາມເຂັ້ມແຂງ, ເລິກເຊິ່ງ, ຮອບດ້ານ ສົມຄູ່ກັບການເປັນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ.

ກອງປະຊຸມໄດ້ຮັບຟັງການສະເໜີພາລະບົດບາດ, ສິດ ແລະໜ້າທີ່ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ການຄົ້ນຄວ້າໂຄງປະກອບກົງຈັກການຈັດຕັ້ງ, ບຸກຄະລາກອນຂອງສະພາປະຊາຊົນຂັ້ນແຂວງ, ການກະກຽມ ແລະ ດຳເນີນການເລືອກຕັ້ງ ສສຊ ແລະ ສສຂ ຊຸດຕໍ່ໄປ ຕາມເນື້ອໃນຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 19/ຄປຈ.ສພຊ, ລົງວັນທີ 26 ສິງຫາ 2025. ຈາກນັ້ນ, ໄດ້ພ້ອມກັນປະກອບຄຳເຫັນຢ່າງມີບັນຍາກາດຟົດຟື້ນ ສາມາດຍົກໃຫ້ເຫັນຂໍ້ຫຍຸ້ງຍາກ, ບົດຮຽນທີ່ຖອດຖອນໄດ້ ຂອງທ້ອງຖິ່ນ ແລະ ສູນກາງ ໃນການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ໂດຍສະເພາະບັນດາເນື້ອໃນນິຕິກຳທີ່ຈະເປັນບ່ອນອີງ ເພື່ອໃຫ້ມີຄວາມຖືກຕ້ອງສອດຄ່ອງຕາມລັດຖະທຳມະນູນ ແລະ ກົດໝາຍ.

ທ່ານ ສຸບັນ ສະອະບຸດ ໄດ້ເນັ້ນໜັກໃຫ້ທຸກພາກສ່ວນເຜີຍແຜ່ເຊື່ອມຊຶມວຽກງານເລືອກຕັ້ງໃຫ້ກວ້າງຂວາງທົ່ວສັງຄົມ ທັງຮີບຮ້ອນຄົ້ນຄວ້າແຕ່ງຕັ້ງຄະນະກຳມະການເລືອກຕັ້ງລະດັບທ້ອງຖິ່ນຂອງຕົນ ໃຫ້ມີຄວາມຖືກຕ້ອງ, ສອດຄ່ອງຕາມກົດໝາຍ, ຄຳແນະນຳຂອງ ຄປຈສພຊ ແລະ ຄົ້ນຄວ້າໄວ້ແຕ່ຫົວທີກ່ຽວກັບເປົ້າໝາຍບຸກຄະລາກອນທີ່ຈະລົງສະໝັກຮັບເລືອກຕັ້ງເປັນ ສສຊ ແລະ ສສຂ ຊຸດຕໍ່ໄປ ແລະ ພ້ອມກັນສະໜັບສະໜູນ, ຊ່ວຍເຫຼືອຕໍ່ການເຄື່ອນໄຫວຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງ ສພຂ ຊຸດທີ V ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃຫ້ມີຄວາມເຂັ້ມແຂງ, ໜັກແໜ້ນເທື່ອລະກ້າວ.

**(ສົມວິຈິດ ໄຊມົນຕີ, ວິນັດ ສີສຸລາດ ແລະ ນາງ ນາລີວັນ)**

# ສູນທອນພົດທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ກ່າວປິດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX




ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ດຳເນີນມາແຕ່ວັນທີ 10 ຫາ 21 ພະຈິກ 2025, ມາຮອດມື້ນີ້ ໄດ້ບັນລຸຜົນສຳເລັດຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້. ກອງປະຊຸມຕີລາຄາສູງທີ່ ສະມາຊິກສະພາແຫ່ງຊາດ, ສະມາຊິກລັດຖະບານ, ຜູ້ແທນກອງປະຊຸມຈາກພາກສ່ວນທີ່ກ່ຽວຂ້ອງ ໄດ້ພ້ອມກັນທຸ່ມ ເທເຫື່ອແຮງ, ສະຕິປັນຍາ ແລະ ເສີມຂະຫຍາຍສິດປະຊາທິປະໄຕ ເຂົ້າໃສ່ການພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດຕາມພາລະບົດບາດຂອງສະພາແຫ່ງຊາດ ທີ່ກຳນົດໄວ້ໃນລັດຖະທຳມະນູນ, ກົດໝາຍ ເຊິ່ງເປັນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີXI ຂອງພັກ ເຂົ້າສູ່ວຽກງານຕົວຈິງຂອງອົງການຈັດຕັ້ງລັດ ດ້ວຍການອອກເປັນມະຕິກອງປະຊຸມສະພາແຫ່ງຊາດ ຈຳນວນ 8 ສະບັບເພື່ອເປັນບ່ອນອີງໃຫ້ແກ່ລັດຖະບານ, ອົງການ ຈັດຕັ້ງທີ່ກ່ຽວຂ້ອງ ນຳໄປຈັດຕັ້ງປະຕິບັດ ແນໃສ່ເຮັດໃຫ້ປະເທດຊາດມີການພັດທະນາຢ່າງຕໍ່ເນື່ອງ, ສືບຕໍ່ມີສະຖຽນລະພາບທາງການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ, ເສດຖະກິດສືບຕໍ່ຂະຫຍາຍຕົວ, ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໄດ້ຮັບການປັບປຸງໃຫ້ດີຂຶ້ນເທື່ອລະກ້າວ.

ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ພິຈາລະນາ, ຮັບຮອງເອົາເນື້ອໃນສຳຄັນຈຳນວນໜຶ່ງດັ່ງນີ້:

1) ກອງປະຊຸມໄດ້ພິຈາລະນາແລະຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025), ປະຈຳປີ 2025; ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 5 ປີ (2021-2025), ປະຈຳປີ 2025 ແລະ ແຜນເງິນຕາ ປະຈຳປີ 2025; ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປະຈຳປີ 2026; ການດັດແກ້ງົບປະມານແຫ່ງລັດລາຍຮັບ-ລາຍຈ່າຍວິຊາການຂອງຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ປີ 2025 ແລະ ເງິນເກີນແຜນປີ 2024; ພິຈາລະນາຮ່າງທິດທາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030).

ກອງປະຊຸມຕີລາຄາສູງຕໍ່ຄວາມພະຍາຍາມຂອງລັດຖະບານ ໃນການນຳພາຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ໃນໄລຍະ 2021 -2025, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 5 ປີ ຄັ້ງທີ IX (2021-2025) ເຊິ່ງໄດ້ຮັບຜົນສຳເລັດຫຼາຍດ້ານ, ເຮັດໃຫ້ທົ່ວປະເທດສືບຕໍ່ມີສະຖຽນລະພາບທາງການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບປອດໄພ ໂດຍພື້ນຖານ, ເສດຖະກິດຂະຫຍາຍຕົວສະເລ່ຍ 5 ປີ ໃນລະດັບ 4.24% (ແຜນການ 5 ປີສະເລ່ຍໃນລະດັບ 4% ຂຶ້ນໄປ), ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງດີຂຶ້ນ, ບົດບາດອິດທິພົນຂອງປະເທດເຮົາໃນພາກພື້ນ ແລະ ສາກົນ ໄດ້ຮັບການຍົກສູງຂຶ້ນ.

ກອງປະຊຸມສະເໜີໃຫ້ລັດຖະບານ ເອົາໃຈໃສ່ຊີ້ນຳການເກັບລາຍຮັບໃຫ້ໄດ້ຢ່າງຄົບຖ້ວນຕາມກົດໝາຍກຳນົດ ໂດຍສະເພາະລາຍຮັບຈາກການຂຸດຄົ້ນຊັບພະຍາກອນທຳມະຊາດ, ແກ້ໄຂບັນຫາການຍົກເວັ້ນການປະຕິບັດກົດໝາຍທີ່ສົ່ງຜົນກະທົບຕໍ່ການເກັບລາຍຮັບເຂົ້າງົບປະມານ, ແກ້ໄຂໜີ້ສິນສາທາລະນະ, ໜີ້ສິນໂຄງການລົງທຶນຂອງລັດໃຫ້ມີຄວາມຄືບໜ້າ; ສືບຕໍ່ຄວບຄຸມ ແລະ ແກ້ໄຂບັນຫາເງິນເຟີ້, ອັດຕາແລກປ່ຽນ, ການເໜັງຕີງຂອງລາຄາສິນຄ້າດ້ວຍການນຳໃຊ້ມາດຕະການທາງກົດໝາຍ ແລະ ມາດຕະການທາງເສດຖະກິດຢ່າງເຂັ້ມງວດ ແລະ ເດັດຂາດ; ການສ້າງ ແລະ ສ້ອມແປງເສັ້ນທາງຫຼວງແຫ່ງຊາດ, ເສັ້ນທາງທ້ອງຖິ່ນ, ເສັ້ນທາງຊາຍແດນ, ເສັ້ນທາງໃນເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ ໃຫ້ໄດ້ຮັບການປັບປຸງດີຂຶ້ນ; ການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນແມ່ນ້ຳຂອງ ແລະ ແມ່ນ້ຳຊາຍແດນ, ການປັບ ປຸງພື້ນຖານໂຄງລ່າງດ່ານສາກົນຕ່າງໆສະເໜີໃຫ້ເອົາໃຈໃສ່ເປັນບູລິມະສິດຕື່ມ.

ກອງປະຊຸມສະເໜີໃຫ້ລັດຖະບານ ເພີ່ມການລົງທຶນຂອງລັດເຂົ້າໃສ່ການພັດທະນາຂົງເຂດສຶກສາກິລາ, ສາທາລະນະສຸກ ໃຫ້ບັນລຸຕາມຄາດໝາຍທີ່ກຳນົດໃນກົດໝາຍ; ພັດທະນາຫຼັກສູດການຮຽນ-ການສອນໃຫ້ມີຄຸນນະພາບຂຶ້ນຕື່ມ, ສົ່ງເສີມການພັດທະນາສີມືແຮງງານໃຫ້ມີຄຸນນະພາບ, ປະຕິບັດນະໂຍບາຍຕໍ່ບຸກຄົນແລະຄອບຄົວທີ່ມີຄຸນງາມຄວາມດີຕໍ່ປະເທດຊາດ, ຊ່ວຍເຫຼືອຜູ້ທີ່ໄດ້ຮັບຜົນກະທົບຈາກໄພພິບັດ, ລວມທັງການແກ້ໄຂ ແລະ ຟື້ນຟູເນື້ອທີການຜະລິດຂອງປະຊາຊົນທີ່ຖືກຜົນກະທົບຈາກໄພພິບັດ ກັບເຂົ້າສູ່ສະພາບປົກກະຕິ.

2) ກອງປະຊຸມໄດ້ພິຈາລະນາແລະຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໃນໄລຍະ 5 ປີ (2021-2025) ແລະ ທິດທາງຕໍ່ໜ້າ:

ກອງປະຊຸມສະແດງຄວາມຊົມເຊີຍຕໍ່ລັດຖະບານແລະທຸກພາກສ່ວນ ມີຄວາມພະຍາຍາມນຳພາຢ່າງຈິງຈັງ ເຮັດໃຫ້ການຜະລິດເປັນສິນຄ້າ ເພື່ອທົດແທນການນຳເຂົ້າແລະເປັນສິນຄ້າສົ່ງອອກ ໄດ້ມີບາດກ້າວຂະຫຍາຍຕົວ, ການປຸງແຕ່ງຜະລິດຕະພັນກະສິກຳມີຈຳນວນເພີ່ມຂຶ້ນ.

ກອງປະຊຸມສະເໜີໃຫ້ລັດຖະບານເອົາໃຈໃສ່ຄຸ້ມຄອງ, ກວດກາຄືນວຽກງານການຟື້ນຟູປ່າ ແລະ ປູກປ່າທົດແທນ; ການວາງຄາດໝາຍການຂຶ້ນໃບທະບຽນອອກໃບຕາດິນໃຫ້ສອດຄ່ອງກັບຄວາມສາມາດໃນການຈັດຕັ້ງປະຕິບັດຕົວຈິງ; ການສົ່ງເສີມການລົງທຶນ, ການເຂົ້າເຖິງແຫຼ່ງທຶນ ຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃຫ້ມີຄວາມສະດວກຂຶ້ນຕື່ມ.

ກອງປະຊຸມສະເໜີໃຫ້ລັດຖະບານ ເພີ່ມທະວີຄວາມເອົາໃຈໃສ່ແກ້ໄຂຢ່າງເດັດຂາດ ຕໍ່ການລັກລອບນຳເຂົ້າສິນຄ້າທີ່ບໍ່ຖືກກົດໝາຍ, ການຄ້າຂາຍ-ທຸລະກິດນອກລະບົບ; ຄົ້ນຄວ້າປະເພດສິນຄ້າທີ່ເປັນທ່າແຮງ ເພື່ອສຸມທຶນຮອນ, ເຕັກນິກວິຊາການ, ແນວພັນ ເຮັດໃຫ້ຜົນຜະລິດກະສິກຳສະອາດ ນັບມື້ນັບມີປະສິດທິຜົນສູງ; ເອົາໃຈໃສ່ຄຸ້ມຄອງ ແລະ ກວດກາການລົງທຶນດ້ານບໍ່ແຮ່ ໃຫ້ມີຄວາມເຂັ້ມງວດຕາມກົດໝາຍ ແລະ ນິຕິກຳທີ່ວາງອອກໃນແຕ່ລະໄລຍະ, ແກ້ໄຂຢ່າງຂາດຕົວແລະເດັດຂາດເຂັ້ມງວດ ຕໍ່ບັນດາໂຄງການທີ່ບໍ່ມີຄຸນນະພາບ ແລະ ບໍ່ເປັນມືອາຊີບ ໂດຍສະເພາະໂຄງການທີ່ໄດ້ຮັບການປະເມີນເປັນປະເພດ C+ ແລະ C; ສູ້ຊົນການເກັບລາຍຮັບຈາກການເຊົ່າ, ສຳປະທານທີ່ດິນ, ການດຳເນີນທຸລະກິດແຮ່ທາດ ເຊິ່ງເປັນລາຍຮັບທີ່ມີມູນຄ່າສູງ ໃຫ້ໄດ້ຢ່າງຄົບຖ້ວນ, ຖືກຕາມຕົວຈິງ ແລະ ຕາມກົດໝາຍກຳນົດແລະເກັບກູ້ໜີ້ຕ້ອງຮັບຂອງລັດ ໃຫ້ໄດ້ຢ່າງຄົບຖ້ວນ.

3) ກອງປະຊຸມໄດ້ພິຈາລະນາແລະຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດໃນໄລຍະ 5 ປີ (2021-2025) ແລະ ທິດທາງຕໍ່ໜ້າ ເຊິ່ງໄລຍະຜ່ານມາລັດຖະບານ ໄດ້ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມສະພາແຫ່ງຊາດ ເຂົ້າໃນວຽກງານຕົວຈິງ ແລະ ມີຜົນສຳເລັດໃນຫຼາຍດ້ານ; ກຳລັງປ້ອງກັນຄວາມສະຫງົບ ໄດ້ດຳເນີນການປາບປາມຂະບວນການຄ້າຂາຍຢາເສບຕິດປະເພດຕ່າງໆ ໄດ້ຢ່າງຫຼວງຫຼາຍ ແລະ ມີມາດຕະການແກ້ໄຂຢ່າງເດັດດ່ຽວ, ສາມາດປົກປ້ອງສັງຄົມຈາກໄພຂອງຢາເສບຕິດໄດ້ໃນລະດັບທີ່ແນ່ນອນ.

ກອງປະຊຸມສະເໜີລັດຖະບານ ເພີ່ມທະວີການໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບຜົນຮ້າຍຂອງຢາເສບຕິດ ຕໍ່ຊີວິດ ແລະ ສຸຂະພາບຂອງລູກຫຼານ, ສ້າງເງື່ອນໄຂໃຫ້ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ແລະ ປະຊາຊົນບັນດາເຜົ່າ ໄດ້ເຂົ້າຮ່ວມວຽກງານການແກ້ໄຂບັນຫາຢາເສບຕິດຢ່າງແຂງແຮງ; ຄົ້ນຄວ້າການສ້າງແລະປັບປຸງນິຕິກຳໃຕ້ກົດໝາຍ ທີ່ກ່ຽວຂ້ອງໃນການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ໃຫ້ເປັນລະບົບຄົບຊຸດ ແລະ ວ່ອງໄວຂຶ້ນຕື່ມ; ເອົາໃຈໃສ່ການປັບປຸງສະພາບຄ້າຍ

ອ່ານຕໍ່ໜ້າ 8

# ຊີວະປະຫວັດຫຍໍ້ຂອງສະຫາຍ ໂຕ ເລິມ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ



- ຊື່ ແລະ ນາມສະກຸນ: ໂຕ ເລິມ
- ວັນທີ, ເດືອນ, ປີ ເກີດ: 10/7/1957
- ທີ່ເກີດ: ຕາແສງເງ້ຍຈຸ, ເມືອງວັນຢາງ, ແຂວງຮຶ່ງອຽນ
- ລະດັບວິຊາສະເພາະ: ສຈ. ດຣ. ດ້ານກົດໝາຍ
-ລະດັບທິດສະດີການເມືອງ: ຊັ້ນສູງ
- ວັນ, ເດືອນ, ປີ ເຂົ້າເປັນສະມາຊິກພັກ: 22/8/1981

**ປະຫວັດການເຄື່ອນໄຫວວຽກງານໂດຍຫຍໍ້**

-1974-1979:ຮຽນຢູ່ມະຫາວິທະຍາໄລຄວາມສະຫງົບປະຊາຊົນ (ປັດຈຸບັນແມ່ນ ສະຖາບັນຄວາມສະຫງົບປະຊາຊົນ)

-1979-2006:ພະນັກງານຢູ່ກົມໃຫຍ່ປກສ, ກະຊວງຕຳຫຼວດ, ຜ່ານບັນດາຕຳແໜ່ງ: ຮອງຫົວໜ້າພະແນກ, ຫົວໜ້າພະແນກ, ຮອງຫົວໜ້າກົມ, ຫົວໜ້າກົມ

- 2006-2009: ຮອງຫົວໜ້າກົມໃຫຍ່ ປກສ, ຮອງຫົວໜ້າກົມຮັບຜິດຊອບກົມໃຫຍ່ ປກສ I; ພົນຈັດຕະວາ (4/2007)

- 2009-8/2010: ຫົວໜ້າກົມໃຫຍ່ ປກສ ເລກ I; ພົນຕີ (7/2010)

- 8/2010-1/2016: ຮອງລັດຖະມົນຕີກະຊວງຕຳຫຼວດ, ກຳມະການສູນກາງພັກສະໄໝທີ XI (01/2011); (9/2014 ພົນໂທ)

- 1/2016-4/2016: ກຳມະການກົມການເມືອງສູນກາງພັກ ສະໄໝທີ XII, ລັດຖະມົນຕີກະຊວງຕຳຫຼວດ

- 4/2016-01/2024: ກຳມະການກົມການເມືອງສູນກາງພັກ ສະໄໝທີ XII, ລັດຖະມົນຕີກະຊວງຕຳຫຼວດ; (01/2019 ພົນເອກ); (1/2021 ກຳມະການກົມການເມືອງສູນກາງພັກ ສະໄໝທີ XIII) ສະມາຊິກສະພາແຫ່ງຊາດ ຊຸດທີ XIV, XV

- 22/5/2024: ປະທານປະເທດ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ

- 3/8/2024 ເຖິງປັດຈຸບັນ: ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ.

# ປະດັບຫຼຽນກາລະນຶກ 70 ປີ ວັນສ້າງຕັ້ງພັກ ແລະ 50 ປີ ວັນສະຖາປະນາ ສປປລາວ



(ສພຊ)-ເພື່ອເປັນທີ່ລະນຶກແກ່ຜູ້ທີ່ມີຜົນງານ, ຄຸນງາມຄວາມດີ ໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຕະຫຼອດໄລຍະທີ່ຜ່ານມາ; ຕອນສວາຍວັນທີ 1 ທັນວານີ້, ສະພາແຫ່ງຊາດ ໄດ້ຈັດພິທີປະດັບຫຼຽນກາລະນຶກ 70 ປີ ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ແລະ ຫຼຽນກາລະນຶກ 50 ປີ ວັນສະຖາປະນາ ສປປລາວ ໂດຍມີບັນດາການນຳຂັ້ນສູງ ແລະ ອະດີດການນຳຂັ້ນສູງ ພ້ອມດ້ວຍພະນັກງານ-ລັດຖະກອນ ແລະ ພະນັກງານບຳນານ ຂອງສະພາແຫ່ງຊາດ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ໄດ້ຜ່ານມະຕິຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍການປະດັບຫຼຽນກາລະນຶກ 70 ປີ ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ສະບັບເລກທີ 1017/ຄລສພ, ລົງວັນທີ10/11/2025ໃຫ້ສະມາຊິກພັກບຳນານຂອງສະພາແຫ່ງຊາດ (ຕຶກຫຼິ່ນ)ຈຳນວນ12ສະຫາຍ, ຍິງ 2 ສະຫາຍ, ຜ່ານລາຍຊື່ຂຶ້ນຮັບຫຼຽນກາລະນຶກ 70 ປີ ແລະ ລາຍຊື່ຂຶ້ນຮັບຫຼຽນກາລະນຶກ 50ປີ; ຈາກນັ້ນ, ໄດ້ປະດັບຫຼຽນໂດຍທ່ານ ປອ. ໄຊສົມພອນ ພົມວິຫານກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແລະ ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດຕາມລຳດັບ.

**(ນາງ ອາລິນ ສຸພົມມະປະດິດ)**

# ມອບ-ຮັບຫ້ອງສະໝຸດ ແລະ ອຸປະກອນການຮຽນ-ການສອນ ໃຫ້ 5 ໂຮງຮຽນ



(ສພຊ) - ວັນທີ 1 ທັນວາຜ່ານມາ ທີ່ໂຮງຮຽນປະຖົມສຶກສາສົມບູນ ລາວ-ຈີນ ບ້ານໜອງປິງ ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ (ນວ), ບໍລິສັດ ຊີເອັດຈີ (CSG) ຮ່ວມກັບບໍລິສັດສາຍສົ່ງໄຟຟ້າແຫ່ງຊາດລາວ (EDL-T) ແລະ ມູນນິທິຊົນນະບົດຂອງຈີນ (CFRD) ໄດ້ຈັດຕັ້ງພິທີມອບ-ຮັບຫ້ອງສະໝຸດ CSG ຈຳນວນ 5 ຫ້ອງ ແລະອຸປະກອນການຮຽນ-ການສອນ ໃຫ້ໂຮງຮຽນປະຖົມສຶກສາສົມບູນລາວ-ຈີນບ້ານໜອງປິງ, ໂຮງຮຽນປະຖົມສຶກສາສົມບູນສີວິໄລ, ໂຮງຮຽນປະຖົມສຶກສາສົມບູນບ້ານຫ້ວຍອອນ ຢູ່ ນວ ແລະ ໂຮງຮຽນມັດທະຍົມສົມບູນເມືອງນາໝໍ້ ແຂວງອຸດົມໄຊແລະ ໂຮງຮຽນປະຖົມນາເຕີຍ ແຂວງຫຼວງນ້ຳທາ; ຕາງໜ້າຮັບໂດຍຜູ້ອຳນວຍການ ແລະ ພາກສ່ວນກ່ຽວຂ້ອງຂອງ5ໂຮງຮຽນດັ່ງກ່າວ ໂດຍມີທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ທັງເປັນປະທານຄະນະສັນຕິພາບ ແລະ ສາມັກຄີຂອງລາວ, ມີບັນດາຜູ້ຕາງໜ້າຈາກກະຊວງທີ່ກ່ຽວຂ້ອງ, ພະແນກສຶກສາທິການ ແລະ ກິລາ ນວ, ແຂວງອຸດົມໄຊ, ແຂວງຫຼວງນ້ຳທາ ແລະ ພາກສ່ວນກ່ຽວຂ້ອງຂອງວິສາຫະກິດຈີນ ປະຈຳຢູ່ ສປປລາວ ເຂົ້າຮ່ວມເປັນສັກຂີພະຍານ.

ຫ້ອງສະໝຸດທີ່ມອບ-ຮັບໃຫ້5 ໂຮງຮຽນ, ປະກອບມີປຶ້ມສອງພາສາ ລາວ-ຈີນ ແລະ ອຸປະກອນອ່ານອັດສະລິຍະ, ໃຊ້ວັດສະດຸປະຢັດພະລັງງານແລະເປັນມິດກັບສິ່ງແວດລ້ອມ ໃນການກໍ່ສ້າງ, ສ້າງສະພາບແວດລ້ອມການອ່ານທີ່ທັນສະໄໝ,ສະດວກສະບາຍ ແລະ ປອດໄພສຳລັບນັກຮຽນ, ກາຍເປັນ “ໂຄມໄຟຄວາມຮູ້” ທີ່ສ່ອງແສງໃຫ້ແກ່ການເຕີບໃຫຍ່ຂອງເດັກນ້ອຍ. ໂຄງການຫ້ອງສະໝຸດ CSG ແມ່ນການປະຕິບັດທີ່ສຳຄັນຂອງບໍລິສັດCSG ໃນການຊຸກຍູ້ດ້ານການສຶກສາ, ສົ່ງເສີມການແລກປ່ຽນວັດທະນະທຳ; ມາຮອດປັດຈຸບັນ, ໂຄງການນີ້ ໄດ້ສ້າງສຳເລັດ500 ແຫ່ງ, ເປັນປະໂຫຍດໃຫ້ແກ່ເດັກນ້ອຍຫຼາຍກວ່າ 200,000 ຄົນ. ການສ້າງຫ້ອງສະໝຸດຢູ່ ສປປລາວ ໃນຄັ້ງນີ້ ເປັນສັນຍານວ່າ: ໂຄງການກ້າວໄປສູ່ສາກົນຢ່າງເປັນທາງການ ຈະເພີ່ມແຮງຂັບເຄື່ອນທີ່ຕໍ່ເນື່ອງໃຫ້ແກ່ການຮ່ວມມືດ້ານການສຶກສາ ຈີນ-ລາວ, ເສີມສ້າງການພັດທະນາກຳລັງຄົນໜຸ່ມ, ສືບຕໍ່ປະກອບສ່ວນພະລັງງານສຳລັບການສ້າງຊຸມຊົນຊາຕາກຳຮ່ວມລາວ-ຈີນທີ່ມີຄຸນນະພາບສູງຂຶ້ນ ແລະ ແໜ້ນແຟ້ນຂຶ້ນ.

ທ່ານສົມມາດພົລເສນາ ກ່າວວ່າ: ການຊ່ວຍເຫຼືອສ້າງຫ້ອງສະໝຸດໃນຄັ້ງນີ້ບໍ່ພຽງແຕ່ນຳເອົາປຶ້ມ, ອຸປະກອນ ແລະ ສະພາບແວດລ້ອມການຮຽນຮູ້ທີ່ດີມາສູ່ໂຮງຮຽນເທົ່ານັ້ນ, ແຕ່ຍັງເປັນກາດເປີດໂອກາດໃຫ້ນ້ອງໆນັກຮຽນ ໄດ້ກ້າວເຂົ້າສູ່ໂລກແຫ່ງຄວາມຮູ້ ແລະ ໂລກພາຍນອກທີ່ກວ້າງໄກທັງເປັນສັນຍະລັກຂອງມິດຕະພາບ ລາວ-ຈີນ; ຫ້ອງສະໝຸດ CSG ຊຸດທຳອິດໃນສປປລາວນີ້, ແມ່ນໜຶ່ງວຽກງານທີ່ຈະແຈ້ງອີກອັນໜຶ່ງຂອງມິດຕະພາບອັນແໜ້ນແຟ້ນລະຫວ່າງປະຊາຊົນຂອງສອງປະເທດລາວ-ຈີນ.

ທ່ານ ໂຈວ ຈຽນ ຮອງຫົວໜ້າຝ່າຍວາງແຜນຍຸດທະສາດຂອງບໍລິສັດCSGກ່າວວ່າ: ບໍລິສັດ CSG ມຸ່ງໝັ້ນໃນການຊຸກຍູ້ການສ້າງຊຸມຊົນຊາຕາກຳຮ່ວມຈີນ-ລາວມາໂດຍຕະຫຼອດ; ໃນຂະນະທີ່ລົງເລິກການຮ່ວມມືດ້ານພະລັງງານໄຟຟ້າ ຈີນ-ລາວ, ປະຕິບັດຄວາມຮັບຜິດຊອບຕໍ່ສັງຄົມຂອງວິສາຫະກິດຢ່າງຫ້າວຫັນ, ຊຸກຍູ້ໃຫ້ມີການປະຕິບັດໂຄງການເພື່ອສາທາລະນະປະໂຫຍດ ເຊັ່ນ: ຫ້ອງສະໝຸດ CSG, ຊ່ວຍເຫຼືອການພັດທະນາການສຶກສາຂອງ ສປປລາວ.

ທ່ານ ລິນ ຣຸຍ ຮອງຜູ້ອຳນວຍການຂອງບໍລິສັດ CSG-LMI, ປະທານບໍລິສັດEDL-T ກ່າວວ່າ: ຫ້ອງສະໝຸດ CSG ບໍ່ພຽງແຕ່ເປັນສະຖານທີ່ສຳລັບຄົ້ນຫາຄວາມຮູ້ແລະການອ່ານ, ແຕ່ຍັງເປັນເວທີທີ່ລວມເອົາຄວາມຫວັງ, ເຊື່ອມຕໍ່ ຈີນ-ລາວ ອີກດ້ວຍ, ຈະເປີດປະຕູສູ່ໂລກກວ້າງໃຫ້ແກ່ເດັກນ້ອຍໃນສປປລາວ.

ໃນໂອກາດດຽວກັນ, ມູນນິທິພັດທະນາຊົນນະບົດຈີນ, ບໍລິສັດສາຍສົ່ງໄຟຟ້າແຫ່ງຊາດລາວ, ບໍລິສັດຊີອີອີຊີ(CEEC), ບໍລິສັດ ຊີຈີເອັນ (CGN), ບໍລິສັດ ເອັສທີພີຊີ (STPC) ແລະ ວິສາຫະກິດຈີນທີ່ປະຈຳຢູ່ ສປປລາວ ໄດ້ມອບລົດຖີບ, ກະເປົາເປ້, ອຸປະກອນກິລາ ແລະ ອື່ນໆ ຫຼາຍກວ່າ 5,000 ອັນ ລວມມູນຄ່າ 2,28 ຕື້ກີບ ໃຫ້ແກ່ 5 ໂຮງຮຽນດັ່ງກ່າວ.

# ຍົກສູງຄວາມສາມາດວຽກງານຄຳຮ້ອງຂໍຄວາມເປັນທຳ



(ສພຂ)-ວັນທີ25-26 ພະຈິກນີ້ ທີ່ເມືອງຄູນຄຳ ແຂວງຄຳມ່ວນ, ສະພາປະຊາຊົນແຂວງຄຳມ່ວນ ໄດ້ຈັດກອງປະຊຸມເຝິກອົບຮົມຍົກສູງຂີດຄວາມສາມາດການຕິດຕາມກວດກາ, ຊຸກຍູ້, ການເກັບກຳຂໍ້ມູນ ຄຳຮ້ອງຂໍຄວາມເປັນທຳ ແລະ ການລາຍງານຜົນຂອງການຕິດຕາມກວດກາຄຳຮ້ອງຂໍຄວາມເປັນທຳ ຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ (ຄປຈສພຂ) ໃຫ້ແກ່ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ), ເລຂາພັກເມືອງ ແລະ ເສນາທິການຊ່ວຍວຽກ ສພຂ ຄຳມ່ວນ ໂດຍການເປັນປະທານຂອງທ່ານ ບຸນມີ ພົມມະສອນ ປະທານສະພາປະຊາຊົນແຂວງຄຳມ່ວນ; ເຂົ້າຮ່ວມເປັນວິທະຍາກອນຂອງທ່ານ ຄຳແພງ ວິລະພັນ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການກົດໝາຍ ແລະ ທ່ານ ອຳໄພ ຈິດມານິນ ຮອງປະທານກຳມາທິການກົດໝາຍ; ມີບັນດາທ່ານຮອງປະທານ ແລະ ກຳມະການຄປຈສພຂ,ເລຂາພັກເມືອງ, ສສຂ ປະຈຳເຂດເລືອກຕັ້ງ 10 ເມືອງ ແລະ ພະນັກງານເສນາທິການຊ່ວຍວຽກສພຂເຂົ້າຮ່ວມຢ່າງພ້ອມພຽງ.

ໃນວາກອງປະຊຸມ,ທ່ານ ແກ້ວບຸນຂວັນ ໄຊຍະວົງສາ ເລຂາພັກເມືອງຄູນຄຳ ໄດ້ລາຍງານໂດຍຫຍໍ້ກ່ຽວກັບຈຸດພິເສດທີ່ພົ້ນເດັ່ນ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກແລະສິ່ງທ້າທາຍຂອງເມືອງໃນໄລຍະ 10 ເດືອນຂອງປີ 2025. ຈາກນັ້ນ, ໄດ້ຮັບຟັງການສະເໜີຂັ້ນຕອນ, ວິທີການ ແລະ ກົນໄກການປະສານສົມທົບ ໃນການລົງເຄື່ອນໄຫວຕິດຕາມກວດກາຄຳຮ້ອງຂໍຄວາມເປັນທຳ;ການລາຍງານຜົນຂອງການຕິດຕາມກວດກາກ່ຽວກັບຄຳຮ້ອງຂໍຄວາມເປັນທຳ ຕໍ່ຄະນະປະຈຳສະພາແຫ່ງຊາດ(ສພຊ) ແລະ ສະພາປະຊາຊົນຂັ້ນແຂວງ ຈາກທ່ານ ຄຳແພງ ວິລະພັນ; ການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ໃນຂົງເຂດຍຸຕິທຳ ຈາກທ່ານ ອຳໄພ ຈິດມານິນ. ຜູ້ເຂົ້າຮ່ວມໄດ້ຈັດແບ່ງກຸ່ມເພື່ອຄົ້ນຄວ້າ, ປະກອບຄຳເຫັນຢ່າງກົງໄປກົງມາໂດຍສົມທຽບໃສ່ວຽກງານຕົວຈິງ, ແລກປ່ຽນບົດຮຽນ ແລະ ປະສົບການເຊິ່ງກັນແລະກັນ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານທີ່ຕິດພັນກັບການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງ ສພຊ, ສພຂ ນັບມື້ນັບມີປະສິດທິພາບ.

ທ່ານບຸນມີພົມມະສອນ ໄດ້ຕີລາຄາສູງຕໍ່ຜົນສຳເລັດຂອງການເຝິກອົບຮົມ ເຊິ່ງຜູ້ເຂົ້າຮ່ວມໄດ້ເອົາໃຈໃສ່ຄົ້ນຄວ້າ ແລະ ສົນທະນາແລກປ່ຽນບົດຮຽນດ້ວຍຄວາມຕັ້ງໜ້າ; ວິທະຍາກອນ ກໍເອົາໃຈໃສ່ຖ່າຍທອດບົດຮຽນ ແລະ ສົມທຽບໃສ່ປະສົບການ ແລະພຶດຕິກຳຕົວຈິງທີ່ມີຄວາມຫຼາກຫຼາຍ, ອຸດົມສົມບູນ ເຮັດໃຫ້ຜູ້ເຂົ້າຮ່ວມມີຄວາມຮັບຮູ້, ເຂົ້າໃຈຕໍ່ກັບຫົວຂໍ້ເລິກເຊິ່ງຂຶ້ນຕື່ມ; ສຳລັບບັນຫາທີ່ຍົກຂຶ້ນມາແລກປ່ຽນນັ້ນ, ວິທະຍາກອນ ໄດ້ອະທິບາຍຊີ້ແຈງບົນພື້ນຖານຫຼັກການຂອງກົດໝາຍ, ບົດຮຽນ ແລະ ພຶດຕິກຳຕົວຈິງທີ່ມີປະສິດທິຜົນດີທີ່ໄດ້ປະຕິບັດຜ່ານມາ ເພື່ອຮັບປະກັນການປະຕິບັດ 3 ພາລະບົດບາດຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງທີ່ກຳນົດໄວ້ໃນກົດໝາຍ ໃຫ້ມີຄຸນນະພາບດີ. ທ່ານຍັງສະແດງຄວາມເຊື່ອໝັ້ນຢ່າງໜັກແໜ້ນວ່າ ຜູ້ເຂົ້າຮ່ວມຈະນຳເອົາເນື້ອໃນ ແລະ ບົດຮຽນຈາກກອງປະຊຸມຄັ້ງນີ້ ໄປຈັດຕັ້ງຜັນຂະຫຍາຍ ແລະ ປະຕິບັດໃຫ້ມີຜົນເປັນຮູບປະທຳໃນວຽກງານຕົວຈິງ, ເປັນປະໂຫຍດສູງສຸດໃນການປະຕິບັດໜ້າທີ່ແລະການຈັດຕັ້ງຂອງຕົນ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນໂດຍແຜນການມີສ່ວນຮ່ວມຂອງປະຊາຊົນຕໍ່ວຽກງານການປົກຄອງທີ່ດີ ແລະ ການສ້າງລັດທີ່ປົກຄອງດ້ວຍກົດໝາຍ ໄລຍະ II (CEGGA-PHASE II) ໂຄງການເຮວີຕັດ (HELVETAS).

# ສະມາຄົມມິດຕະພາບ ລາວ-ຫວຽດນາມ-ລາວ ພົບປະສອງຝ່າຍ




(ສພຊ) - ວັນທີ 1 ທັນວາຜ່ານມາ ທີ່ສະພາແຫ່ງຊາດ ໄດ້ມີພິທີພົບປະແລກປ່ຽນບົດຮຽນລະຫວ່າງສະມາຄົມມິດຕະພາບ ລາວ-ຫວຽດນາມ ແລະ ຫວຽດນາມ-ລາວ ຂັ້ນສູນກາງ ເຊິ່ງຝ່າຍລາວນຳໂດຍສະຫາຍ ບັນດິດ ສຈ. ບໍ່ວຽງຄຳ ວົງດາລາ ກຳມະການສູນກາງພັກ, ລັດຖະມົນຕີກະຊວງເຕັກໂນໂລຊີ ແລະ ການສື່ສານ, ປະທານສະມາຄົມມິດຕະພາບ ລາວ-ຫວຽດນາມ ຂັ້ນສູນກາງ, ຝ່າຍຫວຽດນາມ ນຳໂດຍສະຫາຍ ຫງວຽນ ດັກ ວິງ ກຳມະການສູນກາງພັກ, ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການວັດທະນະທຳ-ສັງຄົມ, ປະທານສະມາຄົມມິດຕະພາບ ຫວຽດນາມ-ລາວ ຂັ້ນສູນກາງ.

ໂອກາດນີ້, ສະຫາຍ ບັນດິດ ສຈ. ບໍ່ວຽງຄຳ ວົງດາລາ ໄດ້ກ່າວສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງຕໍ່ການມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ ຂອງຄະນະຜູ້ແທນສະມາຄົມມິດຕະພາບ ຫວຽດນາມ-ລາວ ຂັ້ນສູນກາງ ໃນຄັ້ງນີ້ ເຊິ່ງເປັນການປະກອບສ່ວນສຳຄັນເຂົ້າໃນການເສີມຂະຫຍາຍແລະເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານ ລາວ-ຫວຽດນາມ ໃຫ້ນັບມື້ເຂົ້າສູ່ລວງເລິກ ເວົ້າລວມ, ເວົ້າສະເພາະ ກໍແມ່ນການຮ່ວມມືແລກປ່ຽນຖອດຖອນບົດຮຽນເຊິ່ງກັນແລະກັນລະຫວ່າງສອງສະມາຄົມມິດຕະພາບ ລາວ-ຫວຽດນາມ ແລະ ຫວຽດນາມ-ລາວ ຂັ້ນສູນກາງ ໃຫ້ມີຄວາມແໜ້ນແຟ້ນຂຶ້ນໄປເລື້ອຍໆ. ສະຫາຍ ຫງວຽນ ດັກ ວິງ ກໍໄດ້ສະແດງຄວາມຂອບໃຈເປັນຢ່າງຍິ່ງ ແລະ ຕີລາຄາສູງຕໍ່ການຕ້ອນຮັບອັນອົບອຸ່ນຂອງສະມາຄົມມິດຕະພາບລາວ-ຫວຽດນາມ ຂັ້ນສູນກາງ.

ການພົບປະໃນຄັ້ງນີ້ດຳເນີນໄປດ້ວຍບັນຍາກາດອັນດີ ແລະ ສະໜິດສະໜົມຮັກແພງຖານອ້າຍນ້ອງ ເຊິ່ງທັງສອງຝ່າຍໄດ້ແຈ້ງສະພາບພົ້ນເດັ່ນ ແລະ ການເຄື່ອນໄຫວວຽກງານຂອງສະມາຄົມມິດຕະພາບຂອງຕົນໃຫ້ກັນຊາບ, ສະຫຼຸບຕີລາຄາການເຄື່ອນໄຫວໄລຍະຜ່ານມາ ແລະ ທິດທາງແຜນການຮ່ວມມືໃນຕໍ່ໜ້າ.

ນອກຈາກການພົບປະ ແລະ ເຮັດວຽກແລ້ວ, ຄະນະສະມາຄົມມິດຕະພາບ ຫວຽດນາມ-ລາວຂັ້ນສູນກາງຍັງໄດ້ໄປຢ້ຽມຊົມສະຖານທີ່ທ່ອງທ່ຽວດ້ານວັດທະນະທຳ ແລະ ທຳມະຊາດຈຳນວນໜຶ່ງ ໃນນະຄອນຫຼວງວຽງຈັນ ແລະ ແຂວງວຽງຈັນອີກດ້ວຍ.



## ປາຖະກະຖາ...

(ຕໍ່ຈາກໜ້າ 1)

(ສພຊ) - ຕອນບ່າຍວັນທີ 28 ພະຈິກນີ້, ທີ່ສະພາແຫ່ງຊາດ ໄດ້ຈັດພິທີປາຖະກະຖາວັນສະຖາປະນາ ສປປລາວ ຄົບຮອບ 50 ປີ, ວັນເກີດປະທານ ໄກສອນ ພົມວິຫານ ຄົບຮອບ 105 ປີ ແລະ ປະດັບຫຼຽນກາລະນຶກ 50 ປີວັນສະຖາປະນາ ສປປລາວ ໂດຍການເລົ່າຄືນມູນເຊື້ອ 2 ວັນສຳຄັນດັ່ງກ່າວຂອງທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ; ມີບັນດາການນຳຂັ້ນສູງ ແລະ ອະດີດການນຳຂັ້ນສູງ ພ້ອມດ້ວຍພະນັກງານ-ລັດຖະກອນ ແລະ ພະນັກງານບຳນານ ຂອງສະພາແຫ່ງຊາດ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ທ່ານຮອງປະທານສະພາແຫ່ງຊາດ ໄດ້ຫວນຄືນໃຫ້ເຫັນເຖິງພາລະກິດການປະຕິວັດຂອງພັກປະຊາຊົນປະຕິວັດລາວ ທີ່ສາມາດຍາດໄດ້ໄຊຊະນະຢ່າງສົມບູນໃນການປະຕິວັດຊາດປະຊາທິປະໄຕຢູ່ປະເທດເຮົາ ແລະ ຜົນງານການປົກປັກຮັກສາແລະສ້າງສາປະເທດຊາດຕະຫຼອດໄລຍະ 50 ປີຜ່ານມາ; ພ້ອມນັ້ນ, ກໍໄດ້ຫວນຄືນມູນເຊື້ອພາລະກິດການປົດປ່ອຍຊາດ, ຜົນງານ-ຄຸນງາມຄວາມດີຂອງປະທານ ໄກສອນ ພົມວິຫານ ແລະ ການເສີມຂະຫຍາຍມູນເຊື້ອວັນທີ 2 ທັນວາ ໃນການປົກປັກຮັກສາແລະສ້າງສາປະເທດຊາດ. ທ່ານຍັງຮຽກຮ້ອງໃຫ້ຕັ້ງໜ້າຮ່ຳຮຽນແບບຢ່າງຄຸນສົມບັດຂອງປະທານ ໄກສອນ ພົມວິຫານ ໂດຍສະເພາະແບບແຜນວິທີເຮັດວຽກຢ່າງມີຫຼັກການ, ມີແບບແຜນໃນການຊີ້ນຳ-ນຳພາ, ຢຶດໝັ້ນຫຼັກການຂອງພັກ; ການເຮັດວຽກມີການວາງແຜນ, ມີແຜນງານ, ໂຄງການລະອຽດ, ມີການຄາດຄະເນລ່ວງໜ້າ; ການເຮັດວຽກມີລະບົບການແບ່ງງານ, ແບ່ງຄວາມຮັບຜິດຊອບ, ມີກົນໄກການປະສານສົມທົບກັບພາກສ່ວນຕ່າງໆຢ່າງແໜ້ນແຟ້ນ, ມີການສະຫຼຸບສ່ອງແສງ, ລາຍງານຢ່າງເປັນລະບົບແລະມີການຕິດຕາມກວດກາຢ່າງຮອບຄອບ ແລະຕໍ່ເນື່ອງແນໃສ່ສ້າງໃຫ້ພັກມີຄວາມປອດໃສ, ສ້າງໃຫ້ລັດມີຄວາມເຂັ້ມແຂງ,ສ້າງໄດ້ຄວາມເຊື່ອໝັ້ນຈາກປະຊາຊົນ; ແບບແຜນວິທີເຮັດວຽກທີ່ຮັບປະກັນລັກສະນະວິທະຍາສາດ ສະແດງອອກຕາມຄວາມຈິງພາວະວິໄສ, ການເຮັດວຽກຕ້ອງໄດ້ເຄົາລົບຫຼັກການ, ຫຼັກເກນ, ກົດເກນ ແລະທິດສະດີຂອງນັກມາກຊິດ, ນັກວິທະຍາສາດທີ່ກ້າວໜ້າ ເພື່ອໝູນໃຊ້ເຂົ້າໃນການພັດທະນາປະເທດຊາດໃຫ້ສອດຄ່ອງກັບຍຸກສະໄໝ; ຄຸນສົມບັດສິນທຳປະຕິວັດ, ເຝິກຝົນຫຼໍ່ຫຼອມນ້ຳໃຈຮັກຊາດ, ນ້ຳໃຈເສຍສະຫຼະອັນສູງສົ່ງ, ຈິດໃຈປະຕິວັດສຸດກົກສຸດປາຍ, ມານະຈິດປະຕິວັດອັນເດັດດ່ຽວໜຽວແໜ້ນ; ທັດສະນະມະຫາຊົນ, ເຄົາລົບນັບຖືປະຊາຊົນ; ຍົກສູງສະຕິຮັກຊາດເອກະລາດເປັນເຈົ້າຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ; ນ້ຳໃຈປະຢັດມັດທະຍັດ, ຄວາມດຸໝັ່ນໃນການອອກແຮງງານ, ຄວາມດຸໝັ່ນຂະຫຍັນພຽນ,ການຊອກຮູ້ຮ່ຳຮຽນຢ່າງບໍ່ຢຸດຢັ້ງແລະຖືເອົາແບບຢ່າງຄວາມສາມັກຄີເປັນບັນຫາໃຈກາງໃນການພັດທະນາອົງການ ແລະ ປະເທດຊາດດ້ວຍການເພີ່ມທະວີຄວາມສາມັກຄີພາຍໃນແລະຕ່າງປະເທດໃຫ້ແໜ້ນແຟ້ນ ເພື່ອສ້າງໄດ້ກຳລັງທີ່ເຂັ້ມແຂງຮັບໃຊ້ແກ່ການປົກປັກຮັກສາ ແລະ ສ້າງສາປະເທດຊາດຂອງເຮົາໃນປັດຈຸບັນ ແລະ ອະນາຄົດ.

ຈາກນັ້ນ, ໄດ້ຜ່ານລັດຖະດຳລັດ ສະບັບເລກທີ 303/ປປທ, ລົງວັນທີ 20 ພະຈິກ 2025 ວ່າດ້ວຍການປະດັບຫຼຽນກາລະນຶກ 50 ປີ ວັນສະຖາປະນາ ສປປລາວ ໃຫ້ແກ່ບັນດາການນຳຂັ້ນສູງ, ອະດີດການນຳຂັ້ນສູງ, ພະນັກງານ-ລັດຖະກອນ ແລະ ພະນັກງານບຳນານ ຂອງສະພາແຫ່ງຊາດ ຈຳນວນ 205 ທ່ານ, ຍິງ 65 ທ່ານ; ແລະ ມີການປະດັບຫຼຽນໂດຍທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ, ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ແລະ ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ເລຂາທິການສະພາແຫ່ງຊາດ ຕາມລຳດັບ.

**(ນາງ ອາລິນ ສຸພົມມະປະດິດ)**



## ການນຳ...

(ຕໍ່ຈາກໜ້າ 1)

ໃຕ້ການນຳພາ-ຊີ້ນຳຂອງພັກປະຊາຊົນປະຕິວັດລາວ ຈິ່ງສາມາດຍາດໄດ້ໄຊຊະນະ ແລະ ປະກາດເອກະລາດ, ສະຖາປະນາເປັນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂຶ້ນຢ່າງສະຫງ່າຜ່າເຜີຍ ໃນວັນທີ 2 ທັນວາ 1975.

ຫຼັງຈາກສຳເລັດການວາງພວງມາລາ, ການນຳພັກ-ລັດ ໄດ້ສືບຕໍ່ເຂົ້າວາງກະຕ່າດອກໄມ້ຢູ່ຕໍ່ໜ້າຮູບປັ້ນຂອງປະທານ ໄກສອນ ພົມວິຫານ ຜູ້ນຳທີ່ແສນເຄົາລົບຮັກຂອງປວງຊົນລາວທັງຊາດ ຢູ່ຫໍພິພິທະພັນ ໄກສອນ ພົມວິຫານ ເພື່ອສະແດງຄວາມກະຕັນຍູຮູ້ບຸນຄຸນຕໍ່ປະທານ ໄກສອນ ພົມວິຫານ ທີ່ໄດ້ເສຍສະຫຼະເຫື່ອແຮງ, ສຸມສະຕິປັນຍາເຂົ້າໃນການນຳພາ-ຊີ້ນຳພາລະກິດປະຕິວັດ ຕໍ່ສູ້ຕ້ານການຮຸກຮານຂອງພວກຈັກກະພັດລ່າເມືອງຂຶ້ນ, ສາມາດຍາດໄດ້ໄຊຊະນະ ແລະ ປະເທດຊາດໄດ້ຮັບການປົດປ່ອຍຢ່າງສົມບູນ. ພາຍຫຼັງສະຖາປານາ ສປປລາວ, ເພິ່ນຍັງເປັນຜູ້ນຳທີ່ມີແນວຄິດລິເລີ່ມ ແລະ ຊອກຫາແນວທາງການປ່ຽນແປງໃໝ່ ເຊິ່ງໄດ້ນຳເອົາຄວາມຢູ່ເຢັນເປັນສຸກມາສູ່ປະຊາຊົນລາວບັນດາເຜົ່າ; ຜົນງານ ແລະ ຄຸນງາມຄວາມດີຂອງເພິ່ນແມ່ນໃຫຍ່ຫຼວງທີ່ສຸດ, ເພິ່ນໄດ້ກາຍເປັນຕົວແທນລວມຍອດແຫ່ງຄວາມຮັກຊາດ ແລະ ເປັນສັນຍະລັກແຫ່ງຊາດລາວວິລະຊົນ, ຄົນລາວຜິລະອາດຫານ ເຊິ່ງຜົນງານແລະຄຸນງາມຄວາມດີຂອງເພິ່ນ ໄດ້ຈາລຶກໃນຄວາມຊົງຈຳຂອງປະຊາຊົນລາວບັນດາເຜົ່າຕະຫຼອດໄປ.

ວັນຊາດທີ 2 ທັນວາ ແມ່ນວັນທີ່ມີຄວາມໝາຍສຳຄັນສຳລັບທົ່ວພັກ, ທົ່ວລັດ ແລະ ທົ່ວປວງຊົນລາວທັງຊາດ, ແມ່ນວັນແຫ່ງໄຊຊະນະອັນຍິ່ງໃຫຍ່ໃນປະຫວັດສາດແຫ່ງການຕໍ່ສູ້ຂອງຊາດລາວເຮົາ, ແມ່ນວັນທີ່ປະຊາຊົນລາວບັນດາເຜົ່າ ໄດ້ມີອິດສະລະພາບ, ໄດ້ເປັນເຈົ້າຂອງປະເທດຊາດຢ່າງແທ້ຈິງ, ແມ່ນວັນທີ່ປະເທດລາວ ໄດ້ມີເອກະລາດຢ່າງສົມບູນ ແລະ ມີອະທິປະໄຕຢ່າງຄົບຖ້ວນ, ມີທີ່ຕັ້ງອັນສົມກຽດແລະມີຖານະເທົ່າທຽມກັບປະເທດອື່ນໆໃນເວທີປະຊາຄົມໂລກ ທັງແມ່ນວັນແຫ່ງສັນຕິພາບ, ວັນແຫ່ງການກ້າວສູ່ຍຸກສະໄໝໃໝ່ແຫ່ງການສ້າງປະເທດລາວ ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

**(ເພຈ: ປະເທດລາວ Pathedlao)**

# ຜົນງານພົ້ນເດັ່ນຂອງສະພາແຫ່ງຊາດ ຊຸດທີ IX (2021-2025)



ສະພາແຫ່ງຊາດ ຊຸດທີ IX ປະກອບມີສະມາຊິກສະພາແຫ່ງຊາດ ທັງໝົດ 164 ທ່ານ, ເພດຍິງ 36 ທ່ານ ກວມເອົາ 21.95%, ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີIX ໄດ້ເລືອກຕັ້ງເອົາທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກເປັນປະທານສະພາແຫ່ງຊາດແລະປະກອບມີບັນດາທ່ານຮອງປະທານສະພາແຫ່ງຊາດ ຈຳນວນ 5 ທ່ານ, ຍິງ 1 ທ່ານ; ມີຄະນະປະຈຳສະພາແຫ່ງຊາດ 16 ທ່ານ, ຍິງ 4 ທ່ານ, ມີ 9 ກຳມາທິການ ແລະ ຄະນະເລຂາທິການສະພາແຫ່ງຊາດ.

ພາຍໃຕ້ການນຳພາ-ຊີ້ນຳຂອງທ່ານ ປອ. ໄຊສົມພອນ ພົມວິຫານກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດໃນຕະຫຼອດໄລຍະການເຄື່ອນໄຫວວຽກງານ 5 ປີ (2021-2025) ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຮັບຜົນສຳເລັດພົ້ນເດັ່ນແຕ່ລະດ້ານ ດັ່ງນີ້:

- ການປະຕິບັດພາລະບົດບາດດ້ານນິຕິບັດຍັດ:

ສະພາແຫ່ງຊາດ ໄດ້ຮັບຮອງເອົາລັດຖະທຳມະນູນ ແຫ່ງ ສປປລາວສະບັບປັບປຸງປີ2025 ແລະຮັບຮອງເອົາການສ້າງແລະປັບປຸງກົດໝາຍ ໄດ້ທັງໝົດ87 ສະບັບໃນນີ້, ກົດໝາຍສ້າງໃໝ່ 24 ສະບັບ ແລະ ກົດໝາຍປັບປຸງ 63 ສະບັບ ເຊິ່ງກວມເອົາ 5 ຂົງເຂດວຽກງານ; ມາຮອດປັດຈຸບັນ ສປປລາວ ມີກົດໝາຍທີ່ປະກາດໃຊ້ແລ້ວ ທັງໝົດ 173 ສະບັບ. ຄົ້ນຄວ້າຕີຄວາມໝາຍແລະອະທິບາຍກົດໝາຍ ໄດ້ທັງໝົດ 14 ເນື້ອໃນ, ອອກນິຕິກຳໃຕ້ກົດໝາຍ ໄດ້ທັງໝົດ 80 ສະບັບ, ຄົ້ນຄວ້າໃຫ້ສັດຕະຍາບັນແກ່ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປລາວ ເປັນພາຄີ ໄດ້ຈຳນວນ 7 ສະບັບ.

-ການປະຕິບັດພາລະບົດບາດດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ:

ສະພາແຫ່ງຊາດ ໄດ້ດຳເນີນກອງປະຊຸມສະໄໝສາມັນແລະສະໄໝວິສາມັນຂອງສະພາແຫ່ງຊາດ ທັງໝົດ 12 ຄັ້ງ ເຊິ່ງໄດ້ພິຈາລະນາວຽກງານການເມືອງ-ການປົກຄອງ, ເສດຖະກິດ-ສັງຄົມ, ການຈັດຕັ້ງ ແລະ ບຸກຄະລາກອນລວມມີເນື້ອໃນທັງໝົດ 196 ຫົວຂໍ້ ແລະ ຮັບຮອງອອກເປັນມະຕິກອງປະຊຸມສະພາແຫ່ງຊາດ ໄດ້ຈຳນວນ 106 ສະບັບ ໃນນີ້, ວຽກງານລັດຖະບານ 54 ສະບັບ, ວຽກງານສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ 18 ສະບັບ, ວຽກງານອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ16ສະບັບ, ວຽກງານສະພາແຫ່ງຊາດ 18 ສະບັບ; ພິເສດ, ສະພາແຫ່ງຊາດ ຊຸດທີ IX ໄດ້ພິຈາລະນາຮັບຮອງເອົາການປັບປຸງກົງຈັກການຈັດຕັ້ງຂອງລັດຖະບານ ເຊິ່ງເປັນການຈັດຕັ້ງຜັນຂະຫຍາຍມະຕິຂອງຄະນະບໍລິຫານງານສູນກາງພັກ ອອກເປັນນິຕິກຳຂອງລັດ. ພ້ອມດຽວກັນນັ້ນ, ໃນເວລາສະພາແຫ່ງຊາດ ບໍ່ໄດ້ເປີດກອງປະຊຸມ, ຄະນະປະຈຳສະພາແຫ່ງຊາດ ໄດ້ດຳເນີນກອງປະຊຸມຂອງຕົນ ທັງໝົດ 60 ຄັ້ງ ເຊິ່ງໄດ້ພິຈາລະນາເນື້ອໃນທັງໝົດ 768 ຫົວຂໍ້ ແລະ ຮັບຮອງອອກເປັນມະຕິຄະນະປະຈຳສະພາແຫ່ງຊາດ ໄດ້ທັງໝົດ 519 ສະບັບ ໃນນີ້, ວຽກງານສະພາແຫ່ງຊາດ 70 ສະບັບ, ວຽກງານລັດຖະບານ 98 ສະບັບ, ວຽກງານສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ344 ສະບັບ, ວຽກງານອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງຊາດ 7 ສະບັບ.

-ການປະຕິບັດພາລະບົດບາດດ້ານການຕິດຕາມກວດກາ:

ສະພາແຫ່ງຊາດ ໄດ້ຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ຕິດພັນກັບສອງວາລະແຫ່ງຊາດ, ການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ການຈັດຕັ້ງປະຕິບັດໂຄງການລົງທຶນດ້ານການຂຸດຄົ້ນແຮ່ທາດ, ບັນຫາເສັ້ນທາງຄົມມະນາຄົມຂົນສົ່ງ, ການຊຸກຍູ້ສົ່ງເສີມການຜະລິດຊົມໃຊ້ພາຍໃນເພື່ອຫຼຸດຜ່ອນການນຳເຂົ້າ, ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ, ວຽກງານສາມສ້າງ ແລະ ຫົວຂໍ້ອື່ນໆ ທັງໝົດ 172 ຄັ້ງ; ໄດ້ຕິດຕາມກວດກາຜ່ານການດຳເນີນກອງປະຊຸມສະພາແຫ່ງຊາດຕໍ່ບັນຫາເຄັ່ງຮ້ອນຂອງສັງຄົມ ຈຳນວນ 490 ຄຳຊັກຖາມ ເພື່ອມອບໃຫ້ບັນດາກະຊວງ-ອົງການແລະພາກສ່ວນຕ່າງໆ ຄົ້ນຄວ້າຫາວິທີການແກ້ໄຂ; ຕິດຕາມກວດກາການຜັນຂະຫຍາຍມາດຕາຂອງກົດໝາຍທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ ຕາມກົດໝາຍປະກາດໃຊ້ ໄດ້ຈຳນວນ 46 ມາດຕາ, ກວມເອົາ 10 ກົດໝາຍ; ຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໄດ້ຈຳນວນ19ກົດໝາຍກວມເອົາກົດໝາຍຂົງເຂດເສດຖະກິດ-ການເງິນ, ຂົງເຂດຍຸຕິທຳ, ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຂົງເຂດວັດທະນະທຳ-ສັງຄົມ ແລະ ຂົງເຂດສະພາແຫ່ງຊາດ. ນອກນັ້ນ, ສະພາແຫ່ງຊາດໄດ້ຮັບຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ທັງໝົດ 1,700 ເລື່ອງ ແລະ ສາມາດພິຈາລະນາແກ້ໄຂໄດ້ ຈຳນວນ 1,400 ເລື່ອງ ເທົ່າກັບ 82.35% ຂອງຈຳນວນຄຳຮ້ອງທີ່ເຂົ້າມາໃນສະພາແຫ່ງຊາດ ຊຸດທີ IX; ນອກນັ້ນ, ຍັງໄດ້ຮັບຄຳຮ້ອງ, ຄຳສະເໜີຂອງປະຊາຊົນ ຜ່ານໂທລະສັບສາຍດ່ວນ ທີ່ສົ່ງມາໄລຍະດຳເນີນກອງປະຊຸມສະພາແຫ່ງຊາດ ເຊິ່ງສັງລວມໄດ້ທັງໝົດ2,708 ເລື່ອງ.

- ການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ:

ສະພາແຫ່ງຊາດແລະສະມາຊິກສະພາແຫ່ງຊາດໃນຖານະເປັນຕົວແທນຂອງປະຊາຊົນ ໄດ້ເອົາໃຈໃສ່ເຄື່ອນໄຫວວຽກງານຢ່າງຕັ້ງໜ້າເຂົ້າໃນວຽກງານສ້າງແລະ ປັບປຸງກົດໝາຍ, ສ້າງນິຕິກຳ ແລະ ໂຄສະນາເຜີຍແຜ່ແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ບັນດານິຕິກຳໃຕ້ກົດໝາຍ ໄດ້ທັງໝົດ19 ຄັ້ງ ເຊິ່ງມີຜູ້ເຂົ້າຮ່ວມ 7,375 ຄົນ. ສະມາຊິກສະພາແຫ່ງຊາດ ໄດ້ປະກອບຄຳເຫັນຢູ່ກອງປະຊຸມສະພາແຫ່ງຊາດ ໄດ້ທັງຈຳນວນ 5,039 ເທື່ອຄົນ; ໃຫ້ຄຳປຶກສາ-ຄຳແນະນຳແກ່ພົນລະເມືອງ, ລົງພົບປະປະຊາຊົນແລະຜູ້ມີສິດເລືອກຕັ້ງ ໄດ້ຈຳນວນ 8,444 ຈຸດເຊິ່ງມີຜູ້ເຂົ້າຮ່ວມ839,567 ຄົນ. ນອກນັ້ນ, ຍັງໄດ້ລະດົມການຊ່ວຍເຫຼືອດ້ານງົບປະມານ ແລະ ວັດຖຸເຄື່ອງໃຊ້ຕ່າງໆ ໃຫ້ແກ່ປະຊາຊົນ ລວມມູນຄ່າທັງໝົດ 7,349,275,756 ກີບ.

-ການປະຕິບັດພາລະບົດບາດເຄື່ອນໄຫວການຕ່າງປະເທດ:

ສະພາແຫ່ງຊາດເອົາໃຈໃສ່ຜັນຂະຫຍາຍແນວທາງການຕ່າງປະເທດຂອງພັກ ເຂົ້າໃນການເຄື່ອນໄຫວວຽກງານການຕ່າງປະເທດຂອງສະພາແຫ່ງຊາດໄດ້ທັງໝົດ 478 ຄັ້ງ ໃນນີ້, ເຄື່ອນໄຫວຢ້ຽມຢາມແລກປ່ຽນບົດຮຽນກັບລັດຖະສະພາຕ່າງປະເທດ ຈຳນວນ54 ຄັ້ງ; ເຂົ້າຮ່ວມກອງປະຊຸມລະດັບຕ່າງໆ ຂອງພາກພື້ນ ແລະ ສາກົນ ຈຳນວນ 124 ຄັ້ງ; ຕ້ອນຮັບຄະນະຜູ້ແທນຂັ້ນສູງຂອງຕ່າງປະເທດລວມທັງທູຕານຸທູດ, ອົງການຈັດຕັ້ງພາກພື້ນ-ສາກົນ ຈຳນວນ 264 ຄັ້ງ; ເຂົ້າຮ່ວມງານສະເຫຼີມສະຫຼອງວັນສຳຄັນຕ່າງໆຂອງຊາດ-ສາກົນ ຈຳນວນ28 ຄັ້ງ. ພ້ອມນັ້ນ, ສະພາແຫ່ງຊາດ ໄດ້ຮັບກຽດເປັນເຈົ້າພາບຈັດກອງປະຊຸມໃນລະດັບພາກພື້ນ ຢູ່ ສປປລາວ ຈຳນວນ 8 ຄັ້ງ; ອັນພົ້ນເດັ່ນ ໄດ້ຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 45 ແລະ ກອງປະຊຸມສຸດຍອດລັດຖະສະພາກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ 1; ຄະນະເລຂາທິການສະພາແຫ່ງຊາດລາວແລະຫ້ອງວ່າການສະພາແຫ່ງຊາດຫວຽດນາມ ໄດ້ດຳເນີນກອງປະຊຸມພົບປະແລກປ່ຽນບົດຮຽນຮ່ວມກັນ 2 ຄັ້ງ ຄື: ຄັ້ງທີ 11 ຈັດຂຶ້ນທີ່ແຂວງກວາງບິ່ງ ສສ. ຫວຽດນາມ ແລະ ຄັ້ງທີ 12 ທີ່ແຂວງອຸດົມໄຊ ສປປລາວ. ອັນພິເສດ, ສະພາແຫ່ງຊາດ ແຫ່ງ ສປປລາວແລະສະພາແຫ່ງຊາດແຫ່ງ ສສ.ຫວຽດນາມ ໄດ້ຈັດພິທີສະເຫຼີມສະຫຼອງຜົນສຳເລັດການສ້າງປຶ້ມສາຍພົວພັນມິດຕະພາບລາວ-ຫວຽດນາມຄົບຮອບ 50 ປີ ຂຶ້ນຢ່າງເປັນທາງການໂດຍເປັນກຽດຢ່າງສູງເຂົ້າຮ່ວມຂອງສະຫາຍເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ. ນອກນັ້ນ, ກໍໄດ້ພົບປະ ແລະ ຕ້ອນຮັບຄະນະຜູ້ແທນຂັ້ນສູງຈາກສະພາສູງລັດເຊຍ, ກຳມະການກົມການເມືອງສູນກາງພັກກອມມູນິດກູບາ, ສະພາທີ່ປຶກສາການເມືອງທົ່ວປະເທດຈີນ ແລະ ປະເທດອື່ນໆ ເນື່ອງໃນໂອກາດເຂົ້າຮ່ວມງານສະເຫຼີມສະຫຼອງວັນສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄົບຮອບ 50 ປີ ແລະ ວັນເກີດປະທານໄກສອນ ພົມວິຫານ ຄົບຮອບ 105 ປີ.

ສັງລວມແລ້ວ, ການເຄື່ອນໄຫວຂອງສະພາແຫ່ງຊາດ ຊຸດທີ IX ຕະຫຼອດໄລຍະ 5 ປີຜ່ານມາ ແມ່ນໄດ້ມີຜົນສຳເລັດຫຼາຍດ້ານເຊິ່ງໄດ້ປະກອບສ່ວນເຂົ້າໃນການສ້າງສາພັດທະນາເສດຖະກິດ-ສັງຄົມ ໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ເຮັດໃຫ້ການສ້າງລັດທີ່ປົກຄອງດ້ວຍກົດໝາຍຂອງປະຊາຊົນ, ໂດຍປະຊາຊົນແລະເພື່ອປະຊາຊົນໄປຕາມທິດນຳຂອງພັກທີ່ກຳນົດໄວ້ໃນມະຕິກອງປະຊຸມໃຫຍ່ຄັ້ງທີXI ຂອງພັກ ທີ່ວ່າ: "ການຄຸ້ມຄອງບໍລິຫານລັດມີປະສິດທິພາບ, ສັງຄົມມີຄວາມສະເໝີພາບ, ຍຸຕິທຳ ແລະ ໄດ້ຮັບການປົກປ້ອງຕາມທິດການປົກຄອງດ້ວຍກົດໝາຍທີ່ສັກສິດ ແລະ ເຂັ້ມງວດ".

**ການປະຕິບັດພາລະບົດບາດດ້ານນິຕິບັນຍັດ:**

ປີ 2021 ສະພາແຫ່ງຊາດ ໄດ້ພິຈາລະນາ, ຮັບຮອງເອົາກົດໝາຍສະບັບປັບປຸງ ຈຳນວນ 2 ສະບັບ ຄື:

- ກົດໝາຍວ່າດ້ວຍຢາເສບຕິດ;

-ກົດໝາຍວ່າດ້ວຍການປັບປຸງບາດມາດຕາຂົງເຂດການເງິນ (ກົດໝາຍວ່າດ້ວຍສ່ວຍສາອາກອນ, ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ, ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, ກົດໝາຍວ່າດ້ວຍອາກອນລາຍໄດ້ແລະກົດໝາຍວ່າດ້ວຍອາກອນຊົມໃຊ້).

ສະພາແຫ່ງຊາດເອົາໃຈໃສ່ຄົ້ນຄວ້າຕີຄວາມໝາຍ ແລະ ອະທິບາຍກົດໝາຍ ໄດ້ຈຳນວນ 3 ມາດຕາ ກວມເອົາກົດໝາຍ 3 ສະບັບ ຄື: ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍວ່າດ້ວຍຄອບຄົວ; ຄົ້ນຄວ້າໃຫ້ສັດຕະຍາບັນແກ່ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປລາວ ເປັນພາຄີ ໄດ້ຈຳນວນ 2 ສະບັບ ຄື: ສົນທິສັນຍາວ່າດ້ວຍການຮ່ວມມືເສດຖະກິດແບບຮອບດ້ານລະດັບພາກພື້ນ ແລະ ອະນຸສັນຍາກ່ຽວກັບຂໍ້ແນະນຳຂອງອົງການແຮງງານສາກົນ. ນອກນັ້ນ, ຍັງໄດ້ໂຄສະນາເຜີຍແຜ່ກົດໝາຍ, ນິຕິກຳໃຕ້ກົດໝາຍ ຢູ່ເປົ້າໝາຍ ແລະ ເຂດເລືອກຕັ້ງຕ່າງໆ ທັງໝົດ 338 ຈຸດເຊິ່ງມີຜູ້ເຂົ້າຮ່ວມ28,167 ຄົນ, ຍິງ 10,609 ຄົນ.



## ຜົນສຳເລັດ...

(ຕໍ່ຈາກໜ້າ 1)

ງານສູນກາງພັກປະຊາຊົນປະຕິວັດລາວ ໂດຍມີບັນດາຄະນະບໍລິຫານງານສູນກາງພັກ, ເລຂາພັກແຂວງ, ກະຊວງ ແລະ ອົງການ ເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້ ໄດ້ດຳເນີນພາຍໃຕ້ບັນຍາກາດແຫ່ງຄວາມສາມັກຄີ, ຄວາມເປັນເອກະພາບແລະຄວາມຮັບຜິດຊອບການເມືອງ ໃນການຄົ້ນຄວ້າ, ປຶກສາຫາລື, ໃຫ້ທິດຊີ້ນຳ ແລະ ໄດ້ເປັນເອກະພາບສູງ ຮັບຮອງເອົາດ້ານຫຼັກການ ຕໍ່ບັນດາເນື້ອໃນຕົ້ນຕໍທີ່ຈະນຳສະເໜີໃນກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ຄື: ຮ່າງໂຄງການການເມືອງ ສະບັບທີ 3 ຂອງພັກ, ຮ່າງລາຍງານການເມືອງກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ, ຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X, ຮ່າງບົດສຳຫຼວດການນຳພາລວມຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ແລະ ຮ່າງກົດລະບຽບພັກສະບັບປັບປຸງ ເຊິ່ງກອງປະຊຸມໄດ້ສຸມໃສ່ຊີ້ນຳ ແລະ ຊີ້ແຈງຕໍ່ບັນດາບັນຫາທີ່ຕັ້ງຂຶ້ນ ເພື່ອຮັບປະກັນໃຫ້ເນື້ອໃນຕ່າງໆ ມີຄວາມສົມບູນຍິ່ງຂຶ້ນ.

ພ້ອມກັນນັ້ນ, ກອງປະຊຸມຍັງໄດ້ມີການດຳເນີນຊີວິດການເມືອງພາຍໃນຄະນະບໍລິຫານງານສູນກາງພັກ ເພື່ອພ້ອມກັນປຶກສາຫາລືແລະສຳຫຼວດກວດຄືນບັນຫາສຳຄັນໃນການນຳພາ-ຊີ້ນຳຂອງຄະນະບໍລິຫານງານສູນກາງພັກຕະຫຼອດສະໄໝທັງໃນດ້ານການນຳພາລວມ ກໍຄືການສຳຫຼວດແຕ່ລະສະຫາຍເຊິ່ງເປັນການທົບທວນຄືນຜົນງານແຫ່ງການນຳພາ-ຊີ້ນຳການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ທີ່ໄດ້ດຳເນີນມາເປັນເວລາ 5 ປີ ແລະ ເປັນການກະກຽມຄວາມພ້ອມໃຫ້ແກ່ການດຳເນີນກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ທີ່ຈະມາເຖິງໃນ




ມໍ່ໆນີ້ ເຊິ່ງຖືເປັນຫຼັກການ, ລະບອບແບບແຜນ ແລະ ກົດເກນຂອງພັກ ທີ່ໄດ້ຍຶດຖື, ຍຶດໝັ້ນ ແລະ ຈັດຕັ້ງປະຕິບັດເປັນມູນເຊື້ອອັນດີງາມຂອງຕົນຕະຫຼອດມາ ນັບຕັ້ງແຕ່ມື້ກໍ່ຕັ້ງພັກ ຈົນຮອດທຸກວັນນີ້.

ໃນຕອນທ້າຍ, ສະຫາຍທອງລຸນ ສີສຸລິດ ໄດ້ເນັ້ນໜັກບາງບັນຫາສຳຄັນວ່າ: ຜົນຂອງກອງປະຊຸມສູນກາງພັກສະໄໝວິສາມັນເທື່ອນີ້, ນອກຈາກພວກເຮົາໄດ້ສຳຫຼວດກວດກາ, ທົບທວນຜົນສຳເລັດ ໃນການນຳພາ-ຊີ້ນຳຕະຫຼອດໄລຍະ 5 ປີຜ່ານມາ ລວມທັງການຕີລາຄາການນຳພາ-ຊີ້ນຳລວມໝູ່ຄະນະແລະສຳຫຼວດກວດກາບຸກຄົນໃນຄະນະບໍລິຫານງານສູນກາງພັກ ຢ່າງມີຄວາມຮັບຜິດຊອບສູງ, ມີປະຊາທິປະໄຕ, ເປີດເຜີຍ ແລະ ຖືກຕ້ອງຕາມກົດລະບຽບຂອງພັກເຮົາ; ຫວັງວ່າບັນດາສະຫາຍ ຈະຖືເອົາບັ້ນດຳເນີນຊີວິດການເມືອງຂອງຄະນະບໍລິຫານງານສູນກາງພັກທ້າຍສະໄໝນີ້ ນຳໄປເປັນບົດຮຽນ, ເປັນເຂັມທິດເຍືອງທາງ ໃຫ້ແກ່ແຕ່ລະສະຫາຍກຳມະການສູນກາງພັກ, ພວກເຮົາຕ້ອງສົ່ງເສີມຈຸດດີໃຫ້ເປັນກຳລັງແຮງ ແລະ ເວລາດຽວກັນ ຕ້ອງເດັດດ່ຽວແກ້ໄຂຈຸດອ່ອນ, ຈຸດບົກຜ່ອງ ແລະ ຂໍ້ຄົງຄ້າງ ໃຫ້ໄດ້ ເພື່ອສືບຕໍ່ສ້າງພັກເຮົາ ໃຫ້ໜັກແໜ້ນ, ເຂັ້ມແຂງ, ເປັນໃຈກາງຂອງແກນນຳທົ່ວສັງຄົມ, ສືບຕໍ່ນຳເອົາປະເທດຊາດອັນແສນຮັກ ແລະ ຫວງແຫນຂອງພວກເຮົາ ກ້າວໄປຢ່າງບໍ່ຢຸດຢັ້ງ. ນັບແຕ່ນີ້ໄປຈົນຮອດກອງປະຊຸມໃຫຍ່ຂອງພັກຄັ້ງທີ XII ຖືເປັນເວລາທີ່ເຕັມໄປດ້ວຍຄວາມເຄັ່ງຮ້ອນ, ພວກເຮົາຕ້ອງໄດ້ສືບຕໍ່ບຸກບືນສູ້ຊົນຈັດຕັ້ງປະຕິບັດບັນດາຄາດໝາຍທີ່ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກວາງອອກ ກໍຄືສືບຕໍ່ຈັດຕັ້ງປະຕິບັດບັນດາໜ້າວຽກຂອງອະນຸກຳມະການຕ່າງໆ ໃຫ້ມີຄວາມພ້ອມຮອບດ້ານເພື່ອກ້າວເຂົ້າສູ່ກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ຢ່າງສະຫງ່າຜ່າເຜີຍ ແລະ ມີຜົນສຳເລັດຢ່າງຈົບງາມ. ເຊື່ອໝັ້ນວ່າ, ພາຍຫຼັງກອງປະຊຸມສູນກາງຄັ້ງນີ້, ຈະສ້າງໄດ້ກຳລັງແຮງໃໝ່ ແລະ ທ່ວງທ່າໃໝ່, ບັນຍາກາດໃໝ່ ເພື່ອຈະພ້ອມກັນຜ່ານຜ່າອຸປະສັກ, ຄວາມຫຍຸ້ງຍາກນາໆປະການແລະສິ່ງທ້າທາຍຕ່າງໆ, ສ້າງບັນຍາກາດແລະກຳລັງແຮງອັນໃໝ່ເພື່ອກ້າວສູ່ກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກເຮົາຢ່າງມີໄຊ.

# 10 ພາກສ່ວນ ຢ້ຽມຊົມຫ້ອງມູນເຊື້ອ, ຫ້ອງປະຊຸມໃຫຍ່ ແລະ ງານວາງສະແດງສະພາແຫ່ງຊາດ ຄົບຮອບ 50 ປີ



(ສພຊ) - ໃນໄລຍະວັນທີ 24-28 ພະຈິກ 2025, ກົມສື່ມວນຊົນ ຮ່ວມກັບຫ້ອງການ



ຄຸ້ມຄອງຫໍສະພາແຫ່ງຊາດ (ສພຊ) ໄດ້ຕ້ອນຮັບ ແລະ ນຳພາ 10 ພາກສ່ວນ ທີ່ມາທັດສະ




ນະສຶກສາຢ້ຽມຊົມຫ້ອງມູນເຊື້ອ, ຫ້ອງປະຊຸມໃຫຍ່ແລະງານວາງສະແດງສະພາແຫ່ງຊາດ ຄົບຮອບ 50 ປີ (2/12/1975-2/12/2025) ຕາມລຳດັບຄື: 1. ພຣະອາຈານ ສີທົນ ໄຊຍະວົງສອນ ຄະນະບໍລິຫານງານປະຈຳສູນກາງອົງການພຸດທະສາສະໜາສຳພັນລາວ (ອພສ), ຫົວໜ້າກົມມາທິການເຜີຍແຜ່ສິລະທັມ ແລະ ປະຕິບັດກັມມະຖານ ສູນກາງ ອພສ, ຮອງປະທານມູນນິທິພຸດທະບັນດິດ, ຮອງປະທານສະມາຄົມອະນຸລັກຢາພື້ນເມືອງລາວ, ທີ່ປຶກສາ ອພສ ເມືອງນາຊາຍທອງນະຄອນຫຼວງວຽງຈັນ (ນວ), ເຈົ້າອາທິການວັດປ່ານາຄູນນ້ອຍ ພ້ອມດ້ວຍຄະນະພະສົງ ແລະ ສິດສານຸສິດ; 2. ຄະນະຈາກກົມກວດກາ, ກະຊວງອຸດສາຫະກຳ ແລະ ການຄ້າ ຈຳນວນ 40 ທ່ານ ເຊິ່ງນຳໂດຍທ່ານ ພຸດທະວັນ ນັນທະວົງ ຫົວໜ້າກົມກວດກາ; 3 ນັກຮຽນຈາກໂຮງຮຽນ ສີຄຳ ພັດທະນາ ຈຳນວນ 135 ຄົນ ເຊິ່ງນຳໂດຍທ່ານອາຈານ ນາງ ກຸ້ງນາງ ພົນທະວົງ; 4 ຄະນະສົງຈາກວັດໂນນສະຫວ່າງ ເມືອງໄຊເສດຖານວ ເຊິ່ງນຳໂດຍພຣະອາຈານຄຳຢາດ ສໍວົງຄຳໄຊ ເຈົ້າອະທິການວັດໂນນສະຫວ່າງ ພ້ອມດ້ວຍຄະນະສົງ, ສິດສານຸສິດ; 5 ຄະນະກຳມະການປົກຄອງເມືອງ (ຄປມ) ສີສັດຕະນາກ ນວ ຈຳນວນ 103 ທ່ານ ເຊິ່ງນຳໂດຍທ່ານ ປອ. ທົນນະກອນ ທອງຄຳ ປະທານ ຄປມ ສີສັດຕະ



ນາກ; 6. 3 ອົງການຈັດຕັ້ງມະຫາຊົນສະຫະພັນນັກຮົບເກົ່າລາວ ຈຳນວນ 35 ທ່ານ ນຳໂດຍທ່ານ ຄຳວັນ ພົມມະຈັກ ປະທານກຳມະບານ; 7. 4 ພາກສ່ວນຈາກເມືອງນາຊາຍທອງ ນວ ນຳໂດຍທ່ານ ສາຄອນ ໃສສະອາດ ປະທານແນວລາວສ້າງຊາດເມືອງ, ທ່ານນາງຕຽງທອງ ສຸລິວົງ ປະທານສະຫະພັນແມ່ຍິງເມືອງ, ທ່ານ ສອນເພັດ ສີຈະເລີນ ຫົວໜ້າຫ້ອງການວັດທະນະທຳເມືອງ, ທ່ານ ນາງ ນິດຕະຍາ ບຸດປະເສີດ ປະທານສະຖານທີ່ທ່ອງທ່ຽວບ້ານວັດທະນະທຳ; 8 ນັກຮຽນຈາກໂຮງຮຽນໄຊສົມພອນ ຈຳນວນ 50 ຄົນ ນຳໂດຍທ່ານ ສີສົມພອນ ທາວົງ ຜູ້ອຳນວຍການໂຮງຮຽນໄຊສົມພອນ; 9 ນ້ອງນັກຮຽນຈາກໂຮງຮຽນ ມີນາ ຈຳນວນ 90 ຄົນ ນຳໂດຍທ່ານ ອາຈານ ນາງ ສຸດາພອນ ອິນແພງທະວົງ; 10 ຄະນະຈາກກົມຄຸ້ມຄອງທຸລະກິດການ ທ່ອງທ່ຽວ, ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ນຳໂດຍທ່ານ ນາງ ສີພອນໄພ ສິດທິໄຊ ຮອງຫົວໜ້າກົມຄຸ້ມ



ຄອງທຸລະກິດການທ່ອງທ່ຽວ.

ການມາທັດສະນະສຶກສາຄັ້ງນີ້, ໄດ້ຮັບຟັງການບັນລະຍາຍໂດຍຫຍໍ້ເຫດການຕ່າງໆ ໃນປະຫວັດສາດ, ຢ້ຽມຊົມການວາງສະແດງຮູບພາບ ແລະ ວັດຖຸພັນຕ່າງໆ, ຊົມຮູບເງົາປະຫວັດຄວາມເປັນມາຂອງສະພາປະຊາຊົນສູງສຸດ ຊຸດທີ I ເຖິງ ສະພາແຫ່ງຊາດຊຸດປັດຈຸບັນ (ຊຸດທີ IX), ນ້ອງໆນັກຮຽນຕອບຄຳຖາມເພື່ອຮັບຂອງລາງວັນ ແລະ ຍັງໄດ້ມອບປຶ້ມທີ່ລະນຶກຈາກ ສພຊ ໃຫ້ທັງ 10 ຄະນະ; ຈາກນັ້ນ, ຍັງໄດ້ຢ້ຽມຊົມຫ້ອງປະຊຸມໃຫຍ່ ເຮັດໃຫ້ຜູ້ທີ່ມາຢ້ຽມຊົມມີຄວາມຮັບຮູ້ແລະເຂົ້າໃຈກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການນິຕິບັນຍັດຫຼາຍຂຶ້ນ.

**(ນາງ ນິດຕາ ຄູນປາກດີ)**






# ວິງຈອນຊີວິດ

# ດົ້ນກົບເມກ

ການສ້າງຫຼືພັດທະນາສິ່ງໃດໜຶ່ງຍ່ອມມີທັງດ້ານບວກ ແລະ ລົບ ເກີດເປັນຜົນກະທົບ ເຊິ່ງບາງບັນຫາກໍເກີດແຊກໃນແນວຄິດເທື່ອລະນ້ອຍແບບບໍ່ຮູ້ສຶກໂຕ ຖ້າວ່າເຈົ້າຂອງຊີວິດຜູ້ນັ້ນ ຫາກບໍ່ຮູ້ສັງເກດ ຫຼື ບໍ່ມີຫຼັກການຫັກຫ້າມປິດຮູຮົ່ວຂອງຊີວິດ, ຜູ້ຂຽນຢາກຍົກຕົວຢ່າງ: ການໃຊ້ຊີວິດຂອງຄົນບາງກຸ່ມບາງປະເພດ ຈາກຕ່າງຖິ່ນມາອາໄສຢູ່ເມືອງຫຼວງເຊິ່ງມີທັງຜູ້ສຳເລັດຈົບງາມໃຫຍ່ໂຕ ແລະ ມີທັງຜູ້ໝົດຫວັງ ຫຼື ລົ້ມເຫຼວ ເພາະການຫຼົງໄຫຼໃນກະແສຄ່ານິຍົມບາງປະການທີ່ເປັນວົງຈອນວັງວົນ ຫຼື ອຸບາດ.

ບາງຄົນຮຽນຈົບມີອາຊີບເຮັດ ໄດ້ເງິນເດືອນດີພໍສົມຄວນ ແຕ່ຍັງເຊົ່າຫ້ອງແຖວຢູ່ເກັບອອມຊັບ ເມື່ອມີພຽງພໍກໍໄປຊື້ດິນປຸກເຮືອນສ້າງຊີວິດສຳເລັດ, ແຕ່ຍັງມີບາງຄົນເຖິງຈະມີເງິນເດືອນສູງ ເຊົ່າຫ້ອງແຖວຢູ່ ແຕ່ບໍ່ສາມາດເກັບອອມຊັບໄດ້ ເພາະຕິດຄ່ານິຍົມຫຼິ້ນກິນຕາມກະແສສັງຄົມ ເຊັ່ນຄຳເວົ້າທີ່ວ່າ ວັນສຸກເມົາ ວັນເສົາຖອນ ວັນທິດແກ້ ຫຼື ບໍ່ດັ່ງນັ້ນ ອາທິດໜຶ່ງມີເຈັດມື້ ແຕ່ເມົາຫ້າມື້; ດັ່ງນັ້ນ, ການຈະປະຢັດອົດອອມຊັບຈຶ່ງບໍ່ສາມາດເຮັດໄດ້. ຜູ້ຂຽນຄິດວ່າ: ຄົງບໍ່ມີທ່ານໃດກ້າປະຕິເສດໄດ້ວ່າ ຄ່ານິຍົມບໍລິໂພກນິຍົມ-ວັດຖຸນິຍົມ ມັນມີອິດທິພົນຖ້ວມລົ້ນຈິດໃຈຄົນສ່ວນໃຫຍ່ໃນສັງຄົມແລ້ວ, ຖ້າວ່າຄົນເຮົາຫຼົງໃນກະແສກິນດື່ມ ຫຼື ຖືກໝູ່ເພື່ອນຊັກຊວນແກ່ດຶງໃນວົງຈອນອຸບາດທີ່ເວົ້ານັ້ນ ແນ່ນອນທັງໝົດຊີວິດກໍບໍ່ສາມາດສ້າງເຮືອນຢູ່ເປັນຂອງຕົນເອງໄດ້, ບາງຄົນຫຼິ້ນກິນຈົນແກ່ເຖົ້າສຸດທ້າຍໄດ້ກັບເມືອຖິ້ມແຂ້ວຢູ່ບ້ານເກີດ ເພາະຜ່າຍແພ້ແກ່ຄວາມສຸກຫຼິ້ນກິນຟຸມເຟືອຍ.

ວົງຈອນຊີວິດຄົນເຮົາ ຖ້າວ່າຕອນຍັງໜຸ່ມແຂງແຮງບໍ່ຄິດອົດອອມຕັ້ງໂຕ-ສ້າງບ້ານເຮືອນ, ຄອບຄົວໃຫ້ໝັ້ນຄົງແລ້ວ ເມື່ອແກ່ໂຕໄປກໍຍາກທີ່ຈະຕັ້ງຫຼັກໄດ້, ສຳຄັນແມ່ນບໍ່ຫຼົງເຫິ່ກະແສມາຍາທີ່ກະຕຸ້ນໃຫ້ຄົນມີແຕ່ມ່ວນຈົນລືມໂຕສຸດທ້າຍກໍທຸກບາດເຖົ້າ! ສະເໜີເປັນຂໍ້ຄິດ.

## ສູນທອນພິດ...

(ຕໍ່ຈາກໜ້າ 3)

ຄຸມຂັງດັດສ້າງ ເພື່ອໃຫ້ຜູ້ໄດ້ຮັບເຄາະຮ້າຍຈາກຢາເສບຕິດ ສາມາດຟື້ນຟູສຸຂະພາບ ແລະ ມີເງື່ອນໄຂພັດທະນາສີມືແຮງງານ ແລະ ພາຍຫຼັງສຳເລັດການປິ່ນປົວແລ້ວ ໃຫ້ມີວິຊາອາຊີບທຳມາຫາກິນ, ບໍ່ໃຫ້ເປັນພາລະແກ່ສັງຄົມ ແລະ ຄອບຄົວ; ເອົາໃຈໃສ່ການສ້າງຄວາມເຂັ້ມແຂງໃຫ້ສະຖາບັນຄອບຄົວ, ຊຸມຊົນ ໃນວຽກງານການຕ້ານບັນຫາຢາເສບຕິດ ໂດຍສະເພາະແມ່ນການສ້າງບ້ານ, ໂຮງຮຽນ ປອດຢາເສບຕິດ ໃຫ້ມີຈຳນວນເພີ່ມຂຶ້ນ.

4) ກອງປະຊຸມໄດ້ພິຈາລະນາແລະຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈຳປີ2025 ແລະຮ່າງແຜນການເຄື່ອນໄຫວວຽກງານປະຈຳປີ 2026 ຂອງອົງການກວດສອບແຫ່ງລັດ; ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2024 ຂອງອົງການກວດສອບແຫ່ງລັດ; ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈຳປີ 2025 ແລະຮ່າງແຜນການເຄື່ອນໄຫວວຽກງານປະຈຳປີ2026ຂອງອົງການກວດກາແຫ່ງລັດ; ບົດລາຍງານຜົນການກວດກາຕາມຜົນການກວດສອບປີ 2023 ຂອງອົງການກວດກາແຫ່ງລັດ:

ກອງປະຊຸມສະແດງຄວາມຊົມເຊີຍ ແລະ ເຫັນດີເປັນເອກະພາບຕໍ່ບົດລາຍງານການແກ້ໄຂຜົນການກວດກາ-ກວດສອບໄລຍະ 5 ປີ ເຊິ່ງທັງສອງອົງການໄດ້ພະຍາຍາມຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຕາມກົດໝາຍ ແລະ ມະຕິສະພາແຫ່ງຊາດ, ມີຜົນສຳເລັດທີ່ພົ້ນເດັ່ນຫຼາຍດ້ານ ໃນການສະກັດກັ້ນແລະແກ້ໄຂປາກົດການຫຍໍ້ທໍ້ຕ່າງໆ ໃນຂົງເຂດການເງິນ-ງົບປະມານ, ເກັບກູ້ຊັບສິນຄືນເຂົ້າງົບປະມານແຫ່ງລັດໄດ້ຈຳນວນບໍ່ໜ້ອຍແລະໄດ້ນຳຜູ້ກະທຳຜິດເຂົ້າສູ່ຂະບວນການຍຸຕິທຳຫຼາຍຂຶ້ນ ເຮັດໃຫ້ປະຊາຊົນມີຄວາມເຊື່ອໝັ້ນຕໍ່ການຄຸ້ມຄອງລັດດ້ວຍກົດໝາຍ.

ກອງປະຊຸມສະເໜີໃຫ້ອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດໃຫ້ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໄຈ້ແຍກລະອຽດ, ອັນໃດສາມາດແກ້ໄຂໄດ້ ແລະ ອັນໃດບໍ່ສາມາດເກັບກູ້ໄດ້ ຫຼື ບໍ່ມີຕົວຕົນແລ້ວ ເພື່ອມີທິດທາງແກ້ໄຂ; ສືບຕໍ່ຄົ້ນຄວ້າການສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍຂອງ2ອົງການເພື່ອກຳນົດມາດຕະການແກ້ໄຂບັນຫາຕ່າງໆ; ເພີ່ມທະວີການກວດກາປົກກະຕິ, ກວດກາແຕ່ຫົວທີ, ກວດກາຕໍ່ເນື່ອງ ແລະ ກວດກາຮອບດ້ານໃຫ້ແຂງແຮງຂຶ້ນຕື່ມ; ຖືເອົາການແກ້ໄຂຜົນການສອບ ເປັນເງື່ອນໄຂ ແລະ ບ່ອນອີງໃນການຕີລາຄາ ແລະ ປະເມີນຜົນ ແລະ ການປະຕິບັດນະໂຍບາຍຕໍ່ການຈັດຕັ້ງ ແລະ ພະນັກງານ-ລັດຖະກອນ; ສະເໜີລັດຖະບານຄົ້ນຄວ້າຈັດສັນງົບປະມານ ແລະ ສະໜອງເຄື່ອງມື, ອຸປະກອນທີ່ທັນສະໄໝ ແລະ ຈຳເປັນ ໃຫ້ແກ່ວຽກງານກວດກາ-ກວດສອບ ເພື່ອສາມາດເຄື່ອນໄຫວວຽກງານມີປະສິດທິພາບດີຂຶ້ນ.

5) ກອງປະຊຸມໄດ້ພິຈາລະນາແລະຮັບຮອງເອົາບົດລາຍງານຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ກ່ຽວການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈຳປີ 2025 ແລະ ຮ່າງແຜນການເຄື່ອນໄຫວວຽກງານປະຈຳປີ 2026:

ກອງປະຊຸມຕີລາຄາສູງຕໍ່ສອງອົງການທີ່ໄດ້ມີຄວາມພະຍາຍາມປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃນການຍົກສູງຄຸນນະພາບການດຳເນີນຄະດີຕາມຂະບວນຍຸຕິທຳ ແລະມີຄວາມຖືກຕ້ອງຕາມກົດໝາຍ, ສອດຄ່ອງກັບຕົວຈິງ; ໄດ້ເອົາໃຈໃສ່ຜັນຂະຫຍາຍມະຕິ, ຄຳສັ່ງຂອງສູນກາງພັກ ແລະ ມະຕິສະພາແຫ່ງຊາດເຂົ້າໃນປັບປຸງຂະບວນການຍຸຕິທຳ ໃຫ້ມີຄວາມໜັກແໜ້ນເຂັ້ມແຂງ, ຮັບປະກັນຄວາມຍຸຕິທຳ, ຖືກຕ້ອງຕາມກົດໝາຍ ແລະ ສອດຄ່ອງຕາມຄວາມຈິງ.

ກອງປະຊຸມສະເໜີໃຫ້ເອົາໃຈໃສ່ການບຳລຸງສ້າງ, ຍົກລະດັບຄວາມຮູ້ຄວາມສາມາດດ້ານວິຊາສະເພາະ ໃຫ້ແກ່ຜູ້ພິພາກສາກາຍເປັນມືອາຊີບ; ຖືສຳຄັນດ້ານຈັນຍາບັນຈັນຍາທຳຂອງພະນັກງານຜູ້ພິພາກສາ; ສ້າງຕັ້ງສານເຂດ ເພື່ອໃຫ້ປະຊາຊົນສາມາດເຂົ້າເຖິງຂະບວນການຍຸຕິທຳໄດ້ຢ່າງສະດວກ, ວ່ອງໄວ; ເອົາໃຈໃສ່ການປະສານສົມທົບລະຫວ່າງ 4 ພາກສ່ວນ ໃຫ້ມີຄວາມແໜ້ນແຟ້ນ ເພື່ອສະດວກໃນການແກ້ໄຂຄະດີຕາມຂະບວນການຍຸຕິທຳ; ເອົາໃຈໃສ່ລົງເລິກຕິດຕາມກວດກາການປະຕິບັດກົດໝາຍຢູ່ສະຖານທີ່ກັກຕົວ, ກັກຂັງ, ສູນດັດສ້າງ ແລະ ຄ້າຍດັດສ້າງ ໃຫ້ເຂັ້ມງວດ; ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອແກ້ໄຂບັນຫາຄຳຕັດສິນຂອງສານ ເພື່ອຫຼຸດຜ່ອນຈຳນວນຄະດີທີ່ສານຕັດສິນແລ້ວ ແຕ່ບໍ່ສາມາດປະຕິບັດຕາມຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ຕາມລັດຖະທຳມະນູນ ແລະ ກົດໝາຍ.

6) ກອງປະຊຸມໄດ້ພິຈາລະນາແລະຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈຳປີ2025 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ວຽກງານຈຸດສຸມຮອດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ເຊິ່ງກອງປະຊຸມໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ການເຄື່ອນໄຫວຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ໃນຕະຫຼອດໄລຍະ 5 ປີ ຜ່ານມາ ໂດຍສະເພາະໃນການປະຕິບັດ 3 ພາລະບົດບາດຂອງຕົນໄດ້ມີຄວາມສຳເລັດຫຼາຍດ້ານ, ສະແດງເຖິງຄຸນນະພາບໃນການເຄື່ອນໄຫວຂອງສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ໄດ້ຮັບການຍົກສູງຂຶ້ນ, ປະຊາຊົນມີຄວາມສົນໃຈ ແລະ ຕິດຕາມການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງຫຼາຍຂຶ້ນ.

ກອງປະຊຸມໄດ້ສະເໜີໃຫ້ເອົາໃຈໃສ່ຕໍ່ການຍົກສູງຄຸນນະພາບຂອງສະພາແຫ່ງຊາດເປັນຕົ້ນການສ້າງ ແລະ ປັບປຸງກົດໝາຍ ໃຫ້ເປັນລະບົບ ແລະ ມີຄຸນນະພາບດີຂຶ້ນ, ມີຄວາມສອດຄ່ອງກັບຄວາມເປັນຈິງ, ສູ້ຊົນເຮັດໃຫ້ການຕົກລົງບັນຫາສຳຄັນພື້ນຖານຂອງຊາດ ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ, ຜົນປະໂຫຍດລວມຂອງຊາດກໍຄືສິດແລະຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ; ເອົາໃຈໃສ່ການຕິດຕາມກວດກາ ແລະ ແກ້ໄຂຜົນການຕິດຕາມກວດກາບັນຫາເຄັ່ງຮ້ອນຂອງສັງຄົມ ໂດຍສະເພາະບັນຫາຜົນກະທົບຂອງໂຄງການການລົງທຶນດ້ານແຮ່ທາດ ຕໍ່ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ, ການເໜັງຕີງຂອງລາຄາສິນຄ້າ, ຄ່າຄອງຊີບສູງ, ບັນຫາຢາເສບຕິດ ແລະ ອື່ນໆ; ເອົາໃຈໃສ່ການລົງພົບປະກັບຜູ້ມີສິດເລືອກຕັ້ງເພື່ອຮັບຟັງຄວາມຄິດຄວາມເຫັນ, ຄວາມຂັດຂ້ອງໝອງໃຈຂອງປະຊາຊົນ ແລະ ນຳມາຄົ້ນຄວ້າຮ່ວມກັບບັນດາອົງການອຳນາດລັດ ເພື່ອພິຈາລະນາແກ້ໄຂ; ຍົກສູງປະສິດທິພາບໃນການເຄື່ອນໄຫວຕ່າງປະເທດ ເພື່ອຍົກສູງບົດບາດອິດທິພົນຂອງປະເທດເຮົາໃນເວທີພາກພື້ນ ແລະ ສາກົນ.

7) ກອງປະຊຸມໄດ້ຮັບຟັງທ່ານຮອງປະທານສະພາແຫ່ງຊາດ ເຜີຍແຜ່ມະຕິກົມການເມືອງສູນກາງພັກ ສະບັບເລກທີ 26/ກມສພ, ລົງວັນທີ 12 ກັນຍາ 2025 ກ່ຽວກັບການເພີ່ມທະວີການນຳພາ-ຊີ້ນຳຂອງອົງຄະນະພັກທຸກຂັ້ນຕໍ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີX ແລະ ສະພາປະຊາຊົນຂັ້ນແຂວງຊຸດທີ V ແລະ ສະເໜີຜົນງານການເຕີບໃຫຍ່ຂະຫຍາຍຕົວຂອງສະພາແຫ່ງຊາດ 50 ປີ ແລະ 5 ປີ ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນຂັ້ນແຂວງ; ຕາງໜ້າຄະນະກຳມະການເລືອກຕັ້ງລະດັບຊາດ ລາຍງານເບື້ອງຕົ້ນກ່ຽວກັບການກະກຽມການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງຊຸດທີ V; ສະເໜີໃຫ້ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງເປັນເຈົ້າການໃນການກະກຽມເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V ແລະ ກ້າວໄປເຖິງການດຳເນີນກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງຊຸດທີVໃນຕົ້ນປີ2026.

ເນື່ອງໃນໂອກາດກະກຽມສະເຫຼີມສະຫຼອງວັນຄົບຮອບ50ປີຂອງສະພາແຫ່ງຊາດ, ສະພາແຫ່ງຊາດ ໄດ້ຈັດພິທີ ປະດັບຫຼຽນໄຊແຮງງານປະເພດຕ່າງໆ ໃຫ້ແກ່ສະພາປະຊາຊົນຂັ້ນແຂວງ ແລະ ສະມາຊິກສະພາແຫ່ງຊາດ ຊຸດທີ IX, ມອບຫຼຽນກາລະນຶກ 50 ປີ ວັນສ້າງຕັ້ງສະພາແຫ່ງຊາດ ແລະ ຫຼຽນກາລະນຶກ 5 ປີ ຂອງສະພາແຫ່ງຊາດ ເພື່ອຢັ້ງຢືນການສຳເລັດໜ້າທີ່ການເປັນສະມາຊິກສະພາແຫ່ງຊາດ ຊຸດທີ IX.

8.) ກອງປະຊຸມໄດ້ຮັບຟັງການຊີ້ແຈງຕໍ່ຄຳຊັກຖາມຂອງທ່ານນາຍົກລັດຖະມົນຕີ, ບັນດາທ່ານໃນຄະນະລັດຖະບານທັງໝົດ 6 ທ່ານ ເຊິ່ງກອງປະຊຸມສະພາແຫ່ງຊາດ ໄດ້ເກັບກຳ, ສັງລວມເອົາບັນຫາເຄັ່ງຮ້ອນຂອງສັງຄົມ, ຄວາມຄິດຄວາມເຫັນຂອງປະຊາຊົນລາວບັນດາເຜົ່າ ແລະບັນດາການນຳຂອງບັນດາກະຊວງ, ອົງການທີ່ກ່ຽວຂ້ອງ ໄດ້ຊີ້ແຈງ, ອະທິບາຍຢ່າງຈະແຈ້ງ, ຄົບຖ້ວນ ເພື່ອສ້າງຄວາມເຂົ້າໃຈ, ຄວາມຮັບຮູ້ ເຖິງສະພາບຕົວຈິງ, ບັນດາວຽກທີ່ລັດຖະບານພວມສຸມໃສ່ແກ້ໄຂໃນປັດຈຸບັນ.

ນອກນັ້ນ, ກອງປະຊຸມໄດ້ຮັບຟັງການລາຍງານຂອງຫົວໜ້າກອງເລຂານຸການກອງປະຊຸມສະພາແຫ່ງຊາດ ກ່ຽວກັບຜົນການຕົກລົງຂອງກອງປະຊຸມຄະນະປະຈຳສະພາແຫ່ງຊາດ ໃນການພິຈາລະນາການສະເໜີນະໂຍບາຍພັກການ-ຮັບອຸດໜູນບຳນານຂອງສະມາຊິກລັດຖະບານ ຈຳນວນ 1 ທ່ານ ຕາມການສະເໜີຂອງທ່ານນາຍົກລັດຖະມົນຕີ.

ໃນຕະຫຼອດໄລຍະ 5 ປີທີ່ຜ່ານມາ ເຖິງວ່າສະພາບການຂອງໂລກ ແລະ ພາກພື້ນ ໄດ້ຜັນແປຢ່າງສັບສົນ, ວ່ອງໄວ ຄາດຄະເນໄດ້ຍາກ ສິ່ງຜົນກະທົບຫຼາຍຢ່າງທາງດ້ານບວກ ແລະທາງດ້ານລົບຕໍ່ປະເທດເຮົາ. ຢູ່ພາຍໃນປະເທດ ຄຽງຄູ່ກັບຜົນສຳເລັດໃຫຍ່ຫຼວງໃນພາລະກິດປ່ຽນແປງໃໝ່ ແຕ່ພວກເຮົາທີ່ໄດ້ປະເຊີນໜ້າກັບສິ່ງທ້າທາຍທົດສອບຫຼາຍຢ່າງ; ເຖິງຢ່າງໃດກໍຕາມ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ, ສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ IV ໄດ້ຕັ້ງໜ້າ ແລະ ເປັນເຈົ້າການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ປະກອບສ່ວນສຳຄັນເຂົ້າໃນການຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່ຂອງພັກ ເປັນຕົ້ນ ມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ ເຊິ່ງສາມາດຍາດໄດ້ຜົນສຳເລັດພົ້ນເດັ່ນຫຼາຍຢ່າງ. ມາຮອດນີ້ສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ IV ໄດ້

ອ່ານຕໍ່ໜ້າ 12

ວາດກະວີລາວ

# 50 ປີ ບົນເສັ້ນທາງເຕີບໃຫຍ່ຂະຫຍາຍຕົວຂອງສະພາແຫ່ງຊາດ

# ແຕ່ງໂດຍ: ນາງ ສຸນທອນ ໄຊຍະຈັກ

❈ ຍາມເມື່ອຄາວກ່ອນກີ້
ປວງປະຊາຊົນເຮົາ
ພັກຖືສຳຄັນກ້ອນ
ຕີສັດຕູເພື່ອໃຫ້

❈ ເຖິງປາຍປີເຈັດຫ້າ
ສອງທັນວາປັກໝາຍ
ວັນລາວມີໄຊກ້າ
ພັກ-ລັດວາງຂີດແຕ້ມ

❈ ໄລຍະທາງຍາວຍ່ານຕື້ນ
ປວງປະຊາຊົນເຮົາ
ຮ່ຳແຜສິງຄາມພ້ອມ
ສືບຕໍ່ສ້າງເພື່ອໃຫ້

❈ ເວລາຍາວຍືດເຍື້ອ
ພັກຄຸ້ມຄອງນຳພາ
ຕັ້ງເປົ້າໝາຍຄືສ້າງ
ເປັນຕົວແທນພີ່ນ້ອງ

❈ ນັບແຕ່ເຮົາປະກາດຕັ້ງ
ໄດ້ມີສະພາປະຊາຊົນຊຸດໜຶ່ງ
ມີຜູ້ແທນເນົາໃນນັ້ນ
ປະທານ ສຸພານຸວົງ ຖືກເລືອກໄດ້

❈ ສະພາຊຸດທີໜຶ່ງນັ້ນ
ເຕົ້າໂຮມ ປວງຊົນລາວ
ທັງສູ້ຊົນປົກປ້ອງ
ຜືນແຜ່ນດິນຂອງຊາດໄວ້

❈ ພັກເຮົາສືບຕໍ່ສ້າງ
ປະຕິບັດເພີ່ມເຕີມ
ທັງປົກປັກຮັກສາສ້າງ
ວາງແນວທາງປ່ຽນແປງໃໝ່ຮອບດ້ານ

❈ ຊາວຫົກມີນາປີແປດເກົ້າ
ທ່ານ ໜູຮັກ ພູມສະຫວັນ
ນຳພາຜູ້ແທນສ້າງ
79 ທ່ານຄິດຄົ້ນ

❈ ສ້າງລັດຖະທຳມະນູນມາເພື່ອໃຫ້
ທັງສົມບູນສັກສິດ
ປະກາດອອກມາໃຊ້
ລາວມີແມ່ກົດໝາຍປະກາດໃຊ້

❈ ສິບຫ້າສິງຫາແນ່ແທ້
ວັນກຳເນີດແມ່ກົດໝາຍ
ນິຕິກຳສົມບູນສ້າງ
ປວງຊົນລາວແຫ່ຍ້ອງ

❈ ເດືອນທັນວາປີເກົ້າສອງເລືອກຕັ້ງ
ທ່ານ ສະໝານ ວິຍາເກດ ເປັນປະທານ
ປະຊາຊົນລາວເລືອກມາໄດ້
ສະພາຊຸດທີສາມແມ່ນໄດ້

❈ ຈາກສະພາປະຊາຊົນສູງສຸດຊື່ເອີ້ນ
ສະພາແຫ່ງຊາດປັດຈຸບັນ
ໜ້າທີ່ພາລະບົດບາດນັ້ນ
ແນ່ໃສ່ເປັນກຳລັງຊຸກຍູ້

❈ ເດືອນທັນວາເກົ້າເຈັດນັ້ນ
ທ່ານ ສະໝານ ວິຍາເກດ ຖືກເລືອກມາ
ຊຸດທີສີ່ຍັງເລືອກໄດ້
ຜູ້ແທນມີເກົ້າສິບເກົ້າທ່ານພ່ຳພ້ອມ

❈ ເວລາວຽນຮອດມື້
ສອງພັນສອງເດືອນກຸມພາ
ທ່ານ ສະໝານ ວິຍາເກດ ໄດ້
ຊຸດນີ້ວາງເປົ້າໝາຍເພື່ອແກ້

❈ ຄວາມສົມບູນໜັກແໜ້ນ
ອັດຊ່ອງຫວ່າງຮູກົດໝາຍ
ສອງພັນສາມປະກາດໃຊ້
ປວງຊົນລາວມ່ວນແມ້ງ

❈ ເມສາສອງພັນຫົກເພີ່ນໄດ້
ເລືອກເອົາສະພາຊຸດທີຫົກ
ມີມານຮຸກຮານລາວ
ຕ່າງສົນລະວົນຮ້ອນ
ສາມັກຄີເປັນປຶກແຜ່ນ
ຖອຍທໍ້ຜ່າຍໜີ
ໂຊກໃຫຍ່ໄຊງາມ
ຂີດສຳຄັນໄວ້
ສອງທັນວາດັ່ງທົ່ວ
ແຜນສ້າງຊາດລາວ
ຊີວິດໃໝ່ຂອງຕົນ
ຖືກປະເຊີນຫຼາຍດ້ານ
ຫຼາຍສິບປີຝຸງມານກໍ່
ລາວເຮົາໄດ້ຮຸ່ງຈະເລີນ
ລັດໃໝ່ຂອງປະຊາ
ປະເທດລາວຈະເລີນກ້າວ
ສະພາປະຊາຊົນສູງສຸດຊຸດທີໜຶ່ງ
ປະຊາເຊື້ອຊາດລາວ
ປະເທດໃໝ່ສາທາ
ເດັ່ນງາມປາກົດຕັ້ງ
ທັງໝົດສີ່ສິບຫ້າທ່ານ
ສັບພະນາມເອີ້ນທ່ານປະທານ
ປອງດອງຮ່ວມສາມັກຄີ
ເຜົ່າປະຊາຕອມຕຸ້ມ
ຮັກສາເອກະລາດ
ໂລກາຮູ້ຊື່ລາວ
ຊີວິດໃໝ່ສົດໃສ
ຍຸດທະສາດສຳຄັນພ້ອມ
ພັດທະນາປະເທດຊາດ
ແຂງເຂັ້ມລື່ນກວ່າຫຼັງ
ສະພາເລີ່ມຊຸດທີສອງ
ຖືກເລືອກເປັນປະທານໃຫ້
ລັດຖະທຳມະນູນກຳເນີດເກີດ
ລົງຄວາມເຫັນຕ້ອມໃສ່ມາດຕາ
ເປັນແມ່ຂອງກົດໝາຍ
ເພື່ອປົກຄອງຊາດລາວໄວ້
ສະໄໝສາມັນຫົກພົ້ນເດັ່ນ
ສັງຄົມຮູ້ທົ່ວສາທາ
ປີເກົ້າໜຶ່ງມີໄຊ
ຊື່ລັດຖະທຳມະນູນອ້າງ
ວາງເປັນກົດໝາຍແມ່
ຊົມເຊີຍເບື້ອງບ່ອນສະພາ
ສະພາຊຸດທີສາມ
ເພື່ອນຳພາເດີນກ້າວ
ມີຜູ້ແທນທັງໝົດ 80 ທ່ານ
ປັບປຸງແກ້ປ່ຽນຊື່ຕົນ
ແປງປ່ຽນເປັນນາມ
ສອດຄ່ອງຕາມລັດຖະທຳມະນູນສ້າງ
ກຳນົດໃນກົດໝາຍແມ່
ເມືອງບ້ານພັດທະນາ ຊອບແລ້ວ!
ເລືອກຕັ້ງໃໝ່ໃນສະພາ
ເພື່ອເປັນປະທານອີກຄັ້ງ
ເອົາປະທານຄົນເກົ່າ
ປະຊາເຊື້ອຮ່ວມຮຽງ
ວາລະໃໝ່ໝູນມາ
ເລືອກຜູ້ແທນຊຸດທີຫ້າ
ເປັນປະທານສືບຕໍ່
ປັບປຸງເນື້ອລັດຖະທຳມະນູນ
ເຕີມຕື່ມຫຼວງຫຼາຍ
ຮັດກຸມສັກສິດເຂັ້ມ
ເປັນທາງການຫຼັງປັບປ່ຽນ
ຫົວຍິ້ມຊື່ນພະໄມ
ເລືອກຕັ້ງຊຸດໃໝ່ວຽນມາ
ທ່ານ ທອງສິງ ທຳມະວົງ ໄດ້
ຖືກຄັດເລືອກມາໃຫ້
ມີຕົວແທນຮ້ອຍສິບຫ້າທ່ານເພີ້ມ

❈ ສິ່ງເສີມບົດບາດເນັ້ນ
ໃຫ້ມີຄວາມເໝາະສົມ
ເປັນການສົ່ງເສີມແຈ້ງ
ຮ່ວມແຮງເອກະພາບພ້ອມ

❈ ວັນເວລາຜ່ານພົ້ນ
ເຖິງເມສາສອງພັນສິບເອັດ
ເລືອກຕົວແທນປະຊາຊົນໄດ້
ທ່ານ ນາງ ປານີ ຢາທໍ່ຕູ້ ຖືກເລືອກໄດ້

❈ ນັ້ນກໍຄືບາດກ້າວ
ແມ່ຍິງລາວຄົນຄົນທຳອິດ
ດຸດດັ່ງເດືອນເພັງແຈ້ງ
ຊຸກຍູ້ບົດບາດໃຫ້

❈ ຈາກນັ້ນ ກຽມປັບປຸງອີກຄັ້ງ
ປັບເນື້ອໃນລັດຖະທຳມະນູນ
ວຽກສາມສ້າງພັກ-ລັດວາງທິດຊີ້
ປີສອງພັນສິບຫ້າປະກາດໃຊ້

❈ ແຜນວາງອອກມາເພື່ອສ້າງ
ຫົວໜ່ວຍຍຸດທະສາດສຳຄັນ
ໃຫ້ເຂັ້ມແຂງຮອບດ້ານ
ເພື່ອຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາ

❈ ຫ້າປີກາຍຜ່ານພົ້ນ
ຈວບຕົ້ນເດືອນເມສາ
ໄດ້ເປັນວັນເລືອກຕັ້ງ
ທ່ານ ນາງ ປານີ ຢາທໍ່ຕູ້

❈ ສະມາຊິກຊຸດນີ້ແມ່ນເພີ້ມ
ຜູ້ແທນທັງຍິງຊາຍ
ມີການວາງແຜນໄວ້
ດ້ວຍກົດໝາຍເດັດຂາດເຂັ້ມ

❈ ເດືອນກຸມພາສອງພັນຊາວເອັດໄດ້
ຊຸດທີເກົ້າທ່ານ ໄຊສົມພອນ ພົມວິຫານ
ຜູ້ແທນລາວຮ້ອຍຫົກສິບສີ່ທ່ານໄດ້
ປວງຊົນລາວທຸກເຜົ່າພ້ອມ

❈ ສິງຫາສອງພັນຊາວເອັດມີເຫດໄດ້
ຂອງຂວັນຈາກສສ. ຫວຽດນາມ
ຢືນຄູ່ຄຽງທຽມຂ້າງ
ນັ້ນເປັນຕຶກສະພາໃຫຍ່ກວ້າງ

❈ ສິບຫ້າສິງຫາສອງພັນຊາວເອັດນັ້ນ
ເປັນວັນດີມີຄວາມໝາຍ
ກຳເນີດມາເພື່ອໃຫ້
ປະຊາລາວຍ່າວຍິ້ມ

❈ ກ່າວໄຂເຖິງບ່ອນນັ້ນ
ບົດບາດດ້ານນິຕິບັນຍັດ
ມີບົດບາດຕົກລົງໄດ້
ມີບົດບາດຕິດຕາມກວດກາພ່ຳພ້ອມ

❈ ເບິ່ງເຫັນຄວາມສຳຄັນຂອງຊຸດເກົ້າ
ຖືເອົາບົດບາດການຊີ້ນຳ-ນຳພາ
ສະພາປະຊາຊົນຊຸດທຳອິດເຖິງຊຸດເກົ້າ
ສ້າງພື້ນຖານໜັກແໜ້ນໄວ້

❈ 2025 ໄດ້ຂີດແຕ້ມ
ປັບປຸງເທື່ອທີສາມ
ມີເນື້ອໃນຮັດກຸມແໜ້ນ
ສ້າງເສດຖະກິດເອກະລາດໄວ້

❈ ສູ້ຊົນສ້າງກຳລັງແຮງເພື່ອໄວ້
ພ້ອມພາກັນມຸ່ງເດີນໄປ
ເພື່ອປະຊາຊົນໄດ້ຊົມໃຊ້
ປະເທດລາວຈຶ່ງຈະຫຼຸດລອດພົ້ນ

❈ ຫ້າສິບປີມາຮອດແລ້ວ
ຂໍນຳເອົາພອນໄຊ
ຮ້ອຍເປັນມາໄລຕອ້ນ
ການນຳລາວທຸກຂັ້ນ
ເປັນປະທານສະພາຄົນໃໝ່
ຈຳນວນຍິງຂຶ້ນກວ່າເດີມ
ສະເໝີພາບຍິງ-ຊາຍ
ເທົ່າທຽມກັນຫຼາຍຂຶ້ນ
ຍິງຊາຍສະເໝີພາບ
ນຳພາສ້າງຊາດພັດທະນາ
ຫ້າປີຂວບໄວວາ
ຊຸດທີເຈັດສະພາເລີ້ມ
ຮ້ອຍສາມສິບສອງທ່ານ
ເປັນປະທານໃຫ້ໂລກຊ່າລື
ປະຫວັດສາດຂອງເຮົາ
ເດັ່ນດັງໄກກ້ອງ
ໃສງາມອິງອາດ
ຍິງ-ຊາຍນັ້ນເທົ່າທຽມ
ແມ່ແບບຂອງກົດໝາຍ
ເພື່ອໃຫ້ສົມບູນຂຶ້ນ
ຕາມແນວທາງສອດຄ່ອງ
ດັງໄກກ້ອງທົ່ວອານາ
ແຂວງປ່ຽນກາຍເປັນ
ສ່ວນເມືອງກໍໂດຍດ້າມ
ບ້ານເປັນຫົວໜ່ວຍພັດທະນາ
ຕາມແນວທາງພັກຊີ້ຈະເລີນກ້າວລື່ນຫຼັງ
ເລີຍລ່ວງໄລລາ
ແຫ່ງປີສອງພັນສິບຫົກນັ້ນ
ສະພາລາວຊຸດທີແປດ
ຖືກເລືອກເປັນປະທານອີກຄັ້ງຢູ່ສະພາ
ຈຳນວນຕື່ມເຕີມຫຼາຍ
ໜຶ່ງຮ້ອຍສີ່ສິບເກົ້າທ່ານ
ຄຸ້ມຄອງປະເທດຊາດ
ປະຊາເຊື້ອໄດ້ເພິ່ງພາ
ເລືອກຕັ້ງໃໝ່ຜູ້ແທນເຮົາ
ຖືກເລືອເປັນປະທານໃຫ້
ເດີມຕາມຮຽງຮ່ວມ
ມີຮອຍຍິ້ມອຸ່ນໃຈ
ສະຫຼອງໃຫຍ່ໃນສະພາ
ທໍສະພາສະຫງ່າງາມສູງຕັ້ງ
ພະທາດຫຼວງໂດດເດັ່ນ
ປະດັບເອ້ຊາດລາວ
ເປັນວັນຄົບຂວບສາມສິບປີ
ທີ່ລັດຖະທຳມະນູນໄດ້
ປວງຊົນລາວໄດ້ອີງເພິ່ງ
ຫົວແຍ້ມຊື່ນໃຈ
ສາມໜ້າທີ່ໃຫຍ່ຂອງສະພາ
ມີສິດອອກກົດໝາຍໃຊ້
ບັນຫາພື້ນຖານສຳຄັນຂອງຊາດ
ໜັກແໜ້ນທົ່ວເຖິງ
ສະພາແຫ່ງຊາດລາວເຮົາ
ເພື່ອປັບປຸງທັງສ້າງ
ມີຮ້ອຍເຈັດສິບສະບັບເກີນກ່ວາ
ສັງຄົມປົກຄອງໄດ້ດ້ວຍກົດໝາຍ
ແຜນຄາດຄະເນໝາຍ
ແມ່ກົດໝາຍໃຫ້ແລ້ວ
ສັກສິດສອດຄ່ອງໄລຍະໃໝ່
ເປັນເຈົ້າແຫ່ງຕົນ ຊອບແລ້ວ!
ພັດທະນາຊາດສີວິໄລ
ສູ່ຫຼັກໄຊໝາຍໄວ້
ປະໂຫຍດສູງສຸດຕາມກຳນົດ
ອອກຈາກຄວາມທຸກດ້ອຍພັດທະນາ
ວັນກຳເນີດສະພາລາວ
ສອດສານກະວີທ້ອຍ
ນຳພອນຝາກທຸກທ່ານ
ສຸກຂີລົ້ນລື່ນກວ່າຫຼັງ ທ່ານເອີຍ!

ລັດຖະສະພາຕ່າງປະເທດ

# ລັດຖະສະພາມົງໂກລີ ເລືອກຕັ້ງປະທານຜູ້ໃໝ່

(Xinhua) - ວັນທີ 20 ພະຈິກຜ່ານມາ, ສະພາຄູຣານໃຫຍ່ ຫຼື ລັດຖະສະພາມົງໂກລີ ໄດ້ເລືອກຕັ້ງ ນຽມ-ໂອຊໍຣ໌ ອູຊຣານ (Nyam-Osor Uchral) ເປັນປະທານສະພາຜູ້ໃໝ່ດ້ວຍຄະແນນສຽງ 82.5% ຈາກ 126 ທີ່ນັ່ງ; ປະທານພັກປະຊາຊົນມົງໂກນຄົນປັດຈຸບັນ ເຂົ້າຮັບຕຳແໜ່ງແທນ ດາຊເຊກເວ ອາມາຣ໌ບາຢາສກາລານ (Dashzegve Amarbayasgalan) ເຊິ່ງໄດ້ຍື່ນໃບລາອອກຢ່າງເປັນທາງການໃນກອງປະຊຸມເມື່ອເດືອນຕຸລາ.

ອູຊຣານ ກ່າວຕໍ່ລັດຖະສະພາວ່າ "ເນື່ອງຈາກອຳນາດສູງສຸດຂອງລັດເປັນຂອງປະຊາຊົນມົງໂກນເທົ່ານັ້ນ, ຂ້າພະເຈົ້າຈະເຮັດວຽກຢ່າງພາກພຽນເພື່ອຍືດໝັ້ນລັດຖະທຳມະນູນ ແລະ ເສີມສ້າງລະບອບປະຊາທິປະໄຕ ແລະ ລັດຖະສະພາຂອງພວກເຮົາເຊິ່ງມີຕົ້ນກຳເນີດ ແລະ ຮາກຖານມາຈາກປະຊາຊົນ".

ອູຊຣານ ອາຍຸ 38 ປີ ໄດ້ຮັບເລືອກຕັ້ງເປັນສະມາຊິກລັດຖະສະພາສາມສະໄໝ ໃນປີ 2016, 2020, ແລະ 2024.




# Kazakhstan ຈະສ້າງຕັ້ງເອທີ AI ແຫ່ງຊາດ ພາຍໃຕ້ກົດໝາຍໃໝ່




(Xinhua) - ວັນທີ 17 ພະຈິກຜ່ານມາ, ຄັສຊິມ-ໂຈມາດ ໂທຄາເຢບ (Kassym-Jomart Tokayev) ປະທານາທິບໍດີຄາຊັກສະຖານ ໄດ້ລົງນາມໃນກົດໝາຍທີ່ຈະອະນຸຍາດໃຫ້ປະເທດສ້າງຕັ້ງເວທີປັນຍາປະດິດ (AI platform) ແຫ່ງຊາດ; ເວທີດັ່ງກ່າວ ຈະຖືກນຳໃຊ້ສຳລັບການພັດທະນາ, ການເຝິກອົບຮົມ ແລະການປະຕິບັດການທົດລອງຜະລິດຕະພັນຊອບແວເວທີແລະຮູບແບບຈຳລອງ AI ສຳລັບໄລຍະເວລາຈຳກັດ.

ກົດໝາຍໃໝ່ນີ້ ໄດ້ກຳນົດຫຼັກການຄວາມຮັບຜິດຊອບ ແລະ ຄວາມໂປ່ງໃສ ເຊິ່ງເຈົ້າຂອງ, ຜູ້ຖືຄອງ ແລະ ຜູ້ໃຊ້ ຈະຕ້ອງແບກຮັບພັນທະທີ່ສອດຄ່ອງກັບບົດບາດຂອງຕົນໃນລະບົບປະຕິບັດການຂອງ AI; ຫ້າມການໃຊ້ງານບາງໜ້າທີ່ (function) ລວມທັງການໃຊ້ວິທີການທີ່ຢູ່ໃຕ້ຈິດສຳນຶກ (subconscious), ການບິດເບືອນ (manipulative) ຫຼື ວິທີການທີ່ຄ້າຍຄືກັນ, ເຊັ່ນດຽວກັນກັບການເກັບກຳ ແລະ ການປະມວນຜົນຂໍ້ມູນສ່ວນບຸກຄົນທີ່ລະເມີດກົດໝາຍການປົກປ້ອງຂໍ້ມູນສ່ວນບຸກຄົນ; ນອກນີ້, ຍັງກຳນົດຂໍ້ບັງຄັບໃຫ້ຕິດກຳກັບເນື້ອຫາສັງເຄາະທີ່ສ້າງຂຶ້ນໂດຍ AI.

ນອກຈາກນັ້ນ, ໂທຄາເຢບ ຍັງໄດ້ລົງນາມປັບປຸງກົດໝາຍທີ່ມີຢູ່ກ່ຽວກັບປັນຍາປະດິດແລະການຫັນເປັນດິຈິຕອນ ເຊິ່ງຄວບຄຸມການໄຫຼວຽນຂອງຊັບສິນດິຈິຕອນທີ່ບໍ່ປອດໄພພາຍໃນປະເທດ; ກ່ອນໜ້ານີ້, ການໄຫຼວຽນຂອງຊັບສິນດິຈິຕອລທີ່ບໍ່ປອດໄພ ໄດ້ຮັບອະນຸຍາດສະເພາະພາຍໃນສູນກາງການເງິນສາກົນອັສຕານາເທົ່ານັ້ນ.

# ສະພາອິນໂດເນເຊຍ ອະນຸມັດ ປັບປຸງປະມວນກົດໝາຍອາຍາ




(Straitstimes) - ສະພາຜູ້ແທນປະຊາຊົນອິນໂດເນເຊຍ ໄດ້ຜ່ານຮ່າງປັບປຸງປະມວນກົດໝາຍການດຳເນີນຄະດີອາຍາຄັ້ງໃຫຍ່ ເພື່ອປັບປຸງລະບົບຍຸຕິທຳທີ່ລ້າສະໄໝຂອງປະເທດ, ດ້ວຍການເລັ່ງລັດການດຳເນີນຄະດີແລະປັບຂັ້ນຕອນທາງກົດໝາຍ ໃຫ້ສອດຄ່ອງກັບປະມວນກົດໝາຍອາຍາສະບັບໃໝ່ໂດຍຈະມີຜົນບັງຄັບໃຊ້ໃນປີ2026.

ຮ່າງກົດໝາຍສະບັບນີ້ ເຊິ່ງໄດ້ຮັບການອະນຸມັດຈາກສະພາຕ່ຳເມື່ອວັນທີ 18 ພະຈິກຜ່ານມາ, ຖືເປັນການປັບປຸງຂອບຂະບວນການຍຸຕິທຳທາງອາຍາຄັ້ງໃຫຍ່ຂອງອິນໂດເນເຊຍ ໃນຮອບຫຼາຍກວ່າສີ່ທົດສະວັດ, ໂດຍຈະກວມເອົາ ຕັ້ງແຕ່ການສືບສວນ ໄປຈົນເຖິງການບັງຄັບໃຊ້ກົດໝາຍ.

ຮ່າງກົດໝາຍດັ່ງກ່າວ ໄດ້ລວມອຳນາດການສືບສວນໄວ້ພາຍໃຕ້ສຳນັກງານຕຳຫຼວດແຫ່ງຊາດ ແລະ ຂະຫຍາຍອຳນາດການບັງຄັບໃຊ້ກົດໝາຍໃຫ້ສາມາດດຳເນີນການໄດ້ໂດຍບໍ່ຕ້ອງມີໝາຍສານ "ໃນສະຖານະການຮີບດ່ວນ"; ນອກຈາກນັ້ນ, ຍັງໃຫ້ອຳນາດທີ່ກວ້າງຂວາງຍິ່ງຂຶ້ນໃນການອາຍັດບັນຊີທະນາຄານ ແລະ ຊັບສິນດິຈິຕອນ, ອະນຸຍາດໃຫ້ຜູ້ສືບສວນ, ໄອຍະການ ຫຼື ຜູ້ພິພາກສາ ສາມາດລະງັບທຸລະກຳທາງການເງິນ ຫຼື ບັນຊີເອເລັກໂຕຣນິກ ໃນລະຫວ່າງການສືບສວນ.

ຮ່າງກົດໝາຍໄດ້ນຳສະເໜີກົນໄກຕ່າງໆທີ່ພົບເຫັນທົ່ວໄປໃນລະບົບກົດໝາຍສະໄໝໃໝ່ ລວມທັງການຕໍ່ລອງຄຳຮັບສາລະພາບ, ຂອບການເຮັດວຽກທີ່ຈະແຈ້ງຂຶ້ນສຳລັບຜູ້ມີສ່ວນຮ່ວມໃນຂະບວນການຍຸຕິທຳ ແລະ ຂໍ້ຕົກລົງເລື່ອນການຟ້ອງຮ້ອງສຳລັບຜູ້ກະທຳຜິດໃນອົງກອນ ເຊິ່ງມີເປົ້າໝາຍເພື່ອປັບປຸງການປະຕິບັດຕາມກົດໝາຍ ແລະ ປະສິດທິພາບໃນການບັງຄັບໃຊ້ກົດໝາຍອາຊະຍາກຳຂອງອົງກອນ.

ບັນດາສະມາຊິກສະພາກ່າວວ່າ ການປ່ຽນແປງດັ່ງກ່າວຈະຊ່ວຍຫຼຸດຄະດີທີ່ຄ້າງໃນສານ ແລະເຮັດໃຫ້ຂະບວນການທາງກົດໝາຍຂອງອິນໂດເນເຊຍເຂົ້າໃກ້ກັບມາດຕະຖານສາກົນ.

ຕາມລັດຖະທຳມະນູນ, ປະທານາທິບໍດີມີເວລາ 30 ວັນ ເພື່ອລົງນາມໃນຮ່າງກົດໝາຍ; ຖ້າບໍ່ດັ່ງນັ້ນ, ຈະກາຍ ເປັນກົດໝາຍໂດຍອັດຕະໂນມັດ.

# ຫວຽດນາມຜ່ານກົດໝາຍສົ່ງຜູ້ຮ້າຍຂ້າມແດນ ອະນຸຍາດໃຫ້ຄຸມຕົວຢ່າງຮີບດ່ວນ 45 ວັນ




(Xinhua) - ວັນທີ 26 ພະຈິກຜ່ານມາ, ສະພາແຫ່ງຊາດຫວຽດນາມ ໄດ້ຜ່ານຮ່າງກົດໝາຍວ່າດ້ວຍການສົ່ງຜູ້ຮ້າຍຂ້າມແດນ ທີ່ອະນຸຍາດໃຫ້ຕຳຫຼວດກັກຕົວບຸກຄົນຢ່າງຮີບດ່ວນໄດ້ດົນເຖິງ 45 ວັນ ເພື່ອລໍຖ້າການສົ່ງຜູ້ຮ້າຍຂ້າມແດນ; ພາຍໃຕ້ກົດໝາຍນີ້, ຫວຽດນາມອະນຸຍາດໃຫ້ສົ່ງຜູ້ຮ້າຍຂ້າມແດນ ໃນການກະທຳຜິດທີ່ຖືກລົງໂທດຈຳຄຸກຢ່າງໜ້ອຍ 1 ປີຂຶ້ນໄປ ທັງຕາມກົດໝາຍຂອງຫວຽດນາມ ແລະ ຂອງຕ່າງປະເທດ.

ກົດໝາຍດັ່ງກ່າວ ຈະມີຜົນບັງຄັບໃຊ້ໃນວັນທີ 1 ກໍລະກົດ 2026.

# ສະພາ Jordan ຜ່ານກົດໝາຍຟື້ນຟູການເກນທະຫານໃນຮອບຫຼາຍສິບປີ



(AFP) - ວັນທີ 17 ພະຈິກຜ່ານມາ, ສະພາຜູ້ແທນລາສະດອນ, ສະພາຕ່ຳຂອງລັດຖະສະພາຊອກດານີ ໄດ້ລົງຄະແນນສຽງເຫັນດີກົດໝາຍຟື້ນຟູການເກນທະຫານຜູ້ຊາຍ ຕັ້ງແຕ່ຕົ້ນປີໜ້າເປັນຕົ້ນໄປ, ຫຼັງຈາກປະເທດນີ້ໄດ້ຢຸດຕິການເກນທະຫານພາກບັງຄັບເປັນເວລາຫຼາຍສິບປີ.

ກະສັດ ຮຸສເຊນ ບິນ ອັລດຸນລາ ທີ II (Hussein bin Abdullah II) ແຫ່ງລາຊະອານາຈັກຊອກດານີ ໄດ້ປະກາດເມື່ອເດືອນສິງຫາ ກ່ຽວກັບການກັບມາໃຊ້ລະບົບການເກນທະຫານ ເຊິ່ງຖືກຍົກເລີກໃນປີ 1991 ເພື່ອກຽມຄວາມພ້ອມໃກ້ກັບຊາຍໜຸ່ມ ໃນການຮັບໃຊ້ ແລະ ປົກປ້ອງປະເທດຊາດ.

ສຳນັກຂ່າວ Petra ຂອງທາງການຊອກດານີ ລາຍງານວ່າ ສະພາຜູ້ແທນລາສະດອນ ໄດ້ລົງມະຕິຢ່າງລົ້ນເຫຼືອ ອະນຸມັດກົດໝາຍສະບັບປັບປຸງ ສຳລັບການເກນທະຫານປະຈຳການ ແລະ ການເກນທະຫານສຳຮອງ ເຊິ່ງນາຍົກລັດຖະມົນຕີ ຈາຟາຣ໌ ຮັສຊັນ (Jafar Hassan) ກ່າວວ່າ ກົດໝາຍສະບັບນີ້ ຈະເປັນບຸລິມະສິດຂອງລັດຖະບານ ເພື່ອກຽມຄວາມພ້ອມສຳລັບການບັງຄັບໃຊ້ໃນຕົ້ນເດືອນກຸມພາ 2026.

ກ່ອນໜ້ານີ້, ໂມຮຳເໝັດ ອັລ-ໂມມານີ (Mohammed al-Momani) ໂຄສົກລັດຖະບານ Mo ໃຫ້ຮູ້ວ່າ: ໂຄງການເກນທະຫານ ມີເປົ້າໝາຍທີ່ຈະຮັບສະໝັກຜູ້ຊາຍ 6,000 ຄົນ ເຊິ່ງຈະມີອາຍຸຄົບ 18 ປີໃນເດືອນກຸມພາປີໜ້າ, ຜູ້ທີ່ບໍ່ລາຍງານຕົວເຂົ້າຮັບລາຊະການທະຫານ ຈະໄດ້ຮັບໂທດຈຳຄຸກ 3 ເດືອນ ຫາ 1 ປີ.

ລັດຖະບານໄດ້ວາງເປົ້າໝາຍສູງສຸດຂອງການເກນທະຫານ ໄວ້ທີ່ 10,000 ຄົນຕໍ່ປີ.

## ປະທານ...

(ຕໍ່ຈາກໜ້າ 1)



(ສພຊ) - ຕອນບ່າຍວັນທີ 1 ທັນວາຜ່ານມາ, ສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ຕ້ອນຮັບ ແລະ ພົບປະກັບສະຫາຍ ໂຕ ເລີມ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງຂອງພັກ, ລັດ ແຫ່ງ ສສ.ຫວຽດນາມ ໃນໂອກາດມາຢ້ຽມຢາມລັດຖະກິດຢູ່ ສປປລາວ ລະຫວ່າງວັນທີ 1-2 ທັນວາ2025ຕາມຄຳເຊື້ອເຊີນຂອງສະຫາຍເລຂາທິການໃຫຍ່, ປະທານປະເທດ ທອງລຸນ ສີສຸລິດ ເພື່ອເຂົ້າຮ່ວມພິທີສະເຫຼີມສະຫຼອງວັນສະຖາປະນາ ສປປ ລາວ ຄົບຮອບ 50 ປີ ແລະ ເປັນປະທານຮ່ວມກອງປະຊຸມພົບປະຂັ້ນສູງລະຫວ່າງພັກປະຊາຊົນປະຕິວັດລາວ ແລະ ພັກກອມມູນິດຫວຽດນາມ ປະຈຳປີ 2026.

ສະຫາຍ ປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບແລະຕີລາຄາສູງຕໍ່ການການມາຢ້ຽມຢາມ ແລະ ເຂົ້າຮ່ວມການສະເຫຼີມສະຫຼອງວັນສະຖາປານາສປປລາວຄັ້ງນີ້ ເຊິ່ງຍິ່ງມີຄວາມໝາຍສຳຄັນຍິ່ງຂຶ້ນ. ປະທານສະພາແຫ່ງຊາດ ຕີລາຄາສູງຕໍ່ຜົນການພົບປະ, ເຮັດວຽກ ລະຫວ່າງສອງເລຂາທິການໃຫຍ່ ເຊິ່ງສອງຝ່າຍໄດ້ມີການແລກປ່ຽນໃນຫຼາຍບັນຫາທີ່ສຳຄັນ ແລະ ເຕັມໄປດ້ວຍບັນຍາກາດໄມຕີຈິດມິດຕະພາບອັນດູດດື່ມຖານສະຫາຍອ້າຍນ້ອງໃນຄອບຄົວດຽວກັນ ແລະ ຍັງໄດ້ເຫັນດີເປັນເອກະພາບ ໃນການຍົກລະດັບການພົວພັນຮ່ວມມືສອງປະເທດ ເປັນສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ ແລະ ການຜູກພັນແບບຍຸດທະສາດ (ເພີ່ມຄວາມສະໜິດຕິດພັນແບບຍຸດທະສາດ) ລະຫວ່າງສອງພັກ, ສອງລັດແລະປະຊາຊົນສອງຊາດລາວ-ຫວຽດນາມ ພ້ອມທັງສະແດງຄວາມເຊື່ອໝັ້ນວ່າ: ການຍົກລະດັບໃນຄັ້ງນີ້ຈະເປັນພື້ນຖານອັນສຳຄັນໃນການຜັນຂະຫຍາຍ ແລະ ເພີ່ມທະວີສາຍພົວພັນສອງປະເທດ ໃຫ້ນັບມື້ນັບແໜ້ນແຟ້ນ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ; ສະແດງຄວາມຊົມເຊີຍສະຫາຍເລຂາທິການໃຫຍ່ ໂຕເລີມ ທີ່ໄດ້ຮັບການປະດັບຫຼຽນຄຳແຫ່ງຊາດ ເຊິ່ງເປັນຫຼຽນສູງສຸດຂອງ ສປປລາວ ເພື່ອເປັນການສະແດງຄວາມຮູ້ບຸນຄຸນ ແລະ ຕີລາຄາສູງຕໍ່ການປະກອບສ່ວນອັນສຳຄັນຂອງສະຫາຍ ເຂົ້າໃນການເສີມຂະຫຍາຍສາຍພົວພັນພິເສດທີ່ມີໜຶ່ງບໍ່ມີສອງໃນໂລກນີ້ ຂອງສອງປະເທດພວກເຮົາ.

ສະຫາຍ ປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມເສົ້າສະຫຼົດໃຈແລະເຫັນໃຈຢ່າງສຸດຊຶ້ງ ໄປຍັງປະຊາຊົນຫວຽດນາມອ້າຍນ້ອງ ທີ່ໄດ້ຮັບຜົນກະທົບຈາກໄພທຳມະຊາດຢ່າງໜັກໜ່ວງ ແລະ ຂໍຢືນຢັນຈະຢູ່ຄຽງບ່າຄຽງໄຫຼ່ກັບ ພັກ, ລັດ ແລະ ປະຊາຊົນຫວຽດນາມທຸກໆເວລາ ທັງມີຄວາມເຊື່ອໝັ້ນຢ່າງຍິ່ງວ່າ ຈະສາມາດຟື້ນຟູຜົນກະທົບ ແລະ ເຮັດໃຫ້ສະພາບການດັ່ງກ່າວກັບຄືນສູ່ປົກກະຕິໂດຍໄວ; ສະແດງຄວາມພາກພູມໃຈເປັນຢ່າງຍິ່ງທີ່ເຫັນວ່າສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລາວ-ຫວຽດນາມ ຍັງສືບຕໍ່ໄດ້ຮັບການເສີມຂະຫຍາຍຢ່າງບໍ່ຢຸດຢັ້ງໃນທຸກໆຂົງເຂດ ກໍຄືການພົວພັນຮ່ວມມືລະຫວ່າງສອງສະພາແຫ່ງຊາດ ໄດ້ຮັບການເສີມຂະຫຍາຍທາງກວ້າງ ແລະ ທາງເລິກສະເໝີມາ.

ສະຫາຍ ໂຕ ເລີມ ໄດ້ສະແດງຄວາມຂອບໃຈຢ່າງຈິງໃຈ ຕໍ່ການຕ້ອນຮັບອັນອົບອຸ່ນດ້ວຍໄມຕີຈິດມິດຕະພາບຖານສະຫາຍອ້າຍນ້ອງ; ສະແດງຄວາມຊົມເຊີຍຕໍ່ບັນດາຜົນສຳເລັດຂອງ ສປປລາວ ເວົ້າລວມ, ເວົ້າສະເພາະຂອງສະພາແຫ່ງຊາດ ຊຸດທີ IX, ຕີລາຄາສູງການພົວພັນຮ່ວມມືລະຫວ່າງສອງປະເທດ ກໍຄືລະຫວ່າງສອງສະພາແຫ່ງຊາດຫວຽດນາມ-ລາວ ທີ່ຍາດມາໄດ້ໃນຕະຫຼອດໄລຍະຜ່ານມາ ເຊິ່ງໄດ້ປະກອບສ່ວນອັນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນແລະການຮ່ວມມືສອງຝ່າຍໃຫ້ນັບມື້ຈະເລີນງອກງາມແລະຂະຫຍາຍຕົວຍິ່ງໆຂຶ້ນ.

**(ນາງ ອາລິນ ສຸພົມມະປະດິດ)**



## ວາງສະແດງ...

(ຕໍ່ຈາກໜ້າ 1)

ໄກສອນພົມວິຫານ" ໄດ້ຈັດຂຶ້ນທີ່ຫໍພິພິທະພັນ ໄກສອນ ພົມວິຫານ ເມື່ອວັນສຸກທີ 28 ພະຈິກຜ່ານມາ ໂດຍມີສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ, ສະຫາຍ ປອ. ໄຊສົມພອນພົມວິຫານປະທານສະພາແຫ່ງຊາດ, ບັນດາສະຫາຍກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ກຳມະການສູນກາງພັກ, ອະດີດການນຳຂັ້ນສູງພັກ-ລັດ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ໃນພິທີ, ສະຫາຍຄຳພັນ ເຜີຍຍະວົງ ຄະນະເລຂາທິການສູນກາງພັກ, ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ, ປະທານສະພາທິດສະດີສູນກາງພັກໄດ້ກ່າວວ່າ: 50 ປີຜ່ານມາ, ປະເທດຊາດຂອງພວກເຮົາ ໄດ້ຜ່ານຜ່າເສັ້ນທາງແຫ່ງການພັດທະນາທີ່ເຕັມໄປດ້ວຍຜົນສຳເລັດອັນໃຫຍ່ຫຼວງໃນແຕ່ລະໄລຍະ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ໂດຍແມ່ນປະທານໄກສອນ ພົມວິຫານ ເປັນຜູ້ນຳໜ້າ ແລະ ຮຸ່ນສືບທອດແຕ່ລະສະໄໝ ຈົນເຖິງປັດຈຸບັນ ໂດຍສະເພາະແນວທາງການປ່ຽນແປງໃໝ່ ເຊິ່ງເຮັດໃຫ້ປະເທດຊາດພວກເຮົາ ໄດ້ບັນລຸຜົນສຳເລັດທີ່ໜ້າພາກພູມໃຈໃນຫຼາຍຂົງເຂດ. ງານວາງສະແດງຄັ້ງນີ້ ສະແດງໃຫ້ເຫັນໝາກຜົນ, ເຫດການອັນສຳຄັນ, ໂດດເດັ່ນ, ເລິກເຊິ່ງ ແລະ ປະທັບໃຈທີ່ສຸດ ທີ່ສະທ້ອນໃຫ້ເຫັນວິວັດທະນາການແຫ່ງການກຳເນີດເກີດຂຶ້ນ ທີ່ສະແດງເຖິງຜົນສຳເລັດໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຕິດພັນກັບຊີວິດ ແລະ ພາລະກິດປະຕິວັດຂອງປະທານ ໄກສອນ ພົມວິຫານ. ງານວາງສະແດງຄັ້ງນີ້ ຍັງເປັນການປະກອບສ່ວນສຳຄັນອັນໜຶ່ງ ເຂົ້າໃນການສຶກສາອົບຮົມມູນເຊື້ອອັນສະຫງ່າງາມຂອງພັກ-ຂອງຊາດກໍຄືສຶກສາຮ່ຳຮຽນເອົາແບບຢ່າງອັນດີເດັ່ນ, ຄຸນສົມບັດສົມທຳປະຕິວັດອັນໃສແຈ້ງຂອງປະທານ ໄກສອນ ພົມວິຫານ ຜູ້ນຳທີ່ເຄົາລົບຮັກ ເປັນຜູ້ນຳໜ້າພາທາງ ແລະ ຄວາມເສຍສະຫຼະທັງເຫື່ອແຮງ, ຈິດໃຈ ແລະ ສະຕິປັນຍາ ພ້ອມທັງຊີວິດອິນຊີອັນລ້ຳຄ່າຂອງບັນດາສະຫາຍພະນັກງານສະມາຊິກພັກໃນແຕ່ລະໄລຍະຂອງການປະຕິວັດ ເພື່ອເຊີດຊູຄັນທຸງຊະນະເລີດຂອງພັກ, ເພື່ອຄວາມຈະເລີນວັດທະນາຂອງປະເທດຊາດອັນແສນຮັກ, ເພື່ອຄວາມຢູ່ເຢັນເປັນສຸກຂອງປະຊາຊົນ; ທັງນີ້, ກໍເພື່ອເຮັດໃຫ້ຄົນຮຸ່ນຫຼັງ ໂດຍສະເພາະຮຸ່ນໜຸ່ມ ໃຫ້ຍຶດໝັ້ນອຸດົມການຂອງພັກ, ສືບທອດມູນເຊື້ອຂອງນັກປະຕິວັດຮຸ່ນອາວຸໂສ, ເດັດດ່ຽວພາປະເທດຊາດກ້າວຂຶ້ນຢ່າງໜັກແໜ້ນ.

ສຳລັບເນື້ອໃນການຈັດວາງສະແດງ ປະກອບມີ II ພາກໃຫຍ່ຄື: ພາກທີ I ຊີວິດ ແລະ ພາລະກິດປະຕິວັດຂອງປະທານ ໄກສອນ ພົມວິຫານ 1920-1992, ພາກທີ II ຜົນສຳເລັດການປົກປັກຮັກສາແລະສ້າງສາພັດທະນາປະເທດຊາດ ຕິດພັນກັບຊີວິດ ແລະ ພາລະກິດປະຕິວັດຂອງປະທານ ໄກສອນ ພົມວິຫານ 1975-2025; ລວມມີຮູບພາບ, ເອກະສານແລະວັດຖຸພັນ ທັງໝົດ 334 ຊິ້ນ.



## ເບິ່ງໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ເລື່ອງມະຍິກມະຍ່ອຍ ແຕ່ບໍ່ດ້ອຍຄວາມສໍາຄັນ

ໃນບົດປະຈໍາວັນນີ້ ຂໍສະເໜີເຫດການມະຍິກມະຍ່ອຍ ແຕ່ບໍ່ດ້ອຍຄວາມສໍາຄັນ ທີ່ແກະມາຈາກໜັງສືພິມວຽງຈັນທາມຫຼາຍສະບັບ.

- ປ້ອງກັນບໍ່ໃຫ້ການຄ້າໄດ້ຮັບຜົນກະທົບ

ໃນກອງປະຊຸມລັດຖະມົນຕີເສດຖະກິດອາຊຽນຄັ້ງທີ 57 ທີ່ຈັດຂຶ້ນຢູ່ມາເລເຊຍ ຫວ່າງບໍ່ດົນມານີ້ ໄດ້ພິຈາລະນາ ແລະ ຕົກລົງຮ່ວມກັນກ່ຽວກັບມາດຕະການອັນຈໍາເປັນຂອງອາຊຽນ ເພື່ອບໍ່ໃຫ້ເສດຖະກິດອາຊຽນໄດ້ຮັບຜົນກະທົບ ຈາກແຮງກົດດັນຈາກພາຍນອກ; ແຕ່ໃນການປ້ອງກັນນັ້ນ ອາຊຽນຈະປະຕິບັດຕາມກະຕິກາທີ່ສອດຄ່ອງກັບທ່າອຽງຂອງຍຸກສະໄໝ ກໍຄືຫຼັກການຂອງອົງການການຄ້າໂລກ (WTO) ຄືການຄ້າຂອງອາຊຽນນັ້ນ ຕ້ອງມີຄວາມເປັນເສລີ, ຍຸຕິທໍາ, ມີສ່ວນຮ່ວມ, ປະຕິບັດຕາມລະບົບການຄ້າຫຼາຍຝ່າຍທີ່ບໍ່ມີການຈໍາແນກ. ອາຊຽນຈະສືບຕໍ່ອ້າແຂນຕ້ອນຮັບປະເທດຄູ່ຄ້າ

ທີ່ປະຕິບັດຕາມຫຼັກການທີ່ກ່າວມາຂ້າງເທິງ ແລະ ຮັບປະກັນຜົນປະໂຫຍດຮ່ວມຂອງອາຊຽນ ແລະ ຂອງປະເທດຄູ່ຄ້າດ້ວຍກັນ.

- ຈ່າຍສູງຂຶ້ນ 3 ເທົ່າ ຍ້ອນຄວາມຈອງຫອງອວດເກັ່ງ

ອີງຕາມຂ່າວຕາສ (TASS) ຂອງສະຫະພັນລັດເຊຍ ຫວ່າງມໍ່ໆມານີ້ ທີ່ໃຫ້ຮູ້ວ່າບັນດາບໍລິສັດຕ່າງໆໃນສະຫະພາບເອີຣົບ (ອີຢູ) ຕ້ອງຈໍາໃຈຈ່າຍຄ່າພະລັງງານໃນລາຄາສູງຂຶ້ນ 2-3 ເທົ່າຕົວ ທຽບກັບຄ່າພະລັງງານທີ່ບໍລິສັດຂອງສະຫະລັດອາເມລິກາເອງຕ້ອງໄດ້ຈ່າຍ. ໃນມໍ່ໆມານີ້ ບັນດາປະເທດໃນສະຫະພາບເອີຣົບ ໄດ້ຢຸດຊື້ພະລັງງານຈາກລັດເຊຍ ກໍເລີຍເຮັດໃຫ້ບໍລິສັດຕ່າງໆ ຕ້ອງໄດ້ໄປຊື້ນໍາສະຫະລັດອາເມລິກາ; ຄວາມບໍ່ຍຸຕິທໍາຢູ່ບ່ອນວ່າ ພະລັງງານຊະນິດດຽວກັນ, ຈໍານວນເທົ່າກັນ ແຕ່ບໍລິສັດໃນອີຢູ ຕ້ອງໄດ້ໃຊ້ຈ່າຍສູງກວ່າບໍລິສັດ ສ.ອາເມລິກາ ເອງ; ເປັນແນວນີ້ ກໍຈະແຂ່ງຂັນກັບບໍລິສັດ ສ.ອາເມລິກາ ບໍ່ໄດ້ແນ່ນອນ. ແພງກວ່າ 2-3 ເທົ່າ ນັ້ນແມ່ນຄ່າໄຟຟ້າເນີ, ຖ້າເປັນຄ່າແກັສ ແມ່ນ 4.5 ເທົ່າ!

- ໃຊ້ກໍາແພງພາສີເປັນອາວຸດ

ມີຂ່າວຫຼັງໆມານີ້ຈາກ ສ.ອາເມລິກາ ທີ່ບອກວ່າ: ທ່ານປະທານາທິບໍດີ ທຣໍາ ໄດ້ສັ່ງຂຶ້ນພາສີນໍາເຂົ້າລົດບັນທຸກຂະໜາດກາງ ແລະ ຂະໜາດໜັກ ຈາກຕ່າງປະເທດ ສູງເຖິງ 25% ນັບແຕ່ວັນທີ 1 ພະຈິກປີນີ້, ຂໍ້ອ້າງກໍຄືວ່າເພື່ອໃຫ້ບໍລິສັດຜະລິດລົດບັນທຸກປະເພດນີ້ ຂອງ ສ.ອາເມລິກາ ເອງ ເຕີບໂຕຮັ່ງມີ ແລະ ເຂັ້ມແຂງແລະສໍາຄັນໄປກວ່ານັ້ນແມ່ນເພື່ອຄວາມໝັ້ນຄົງຂອງຊາດ; ທ່ານ ທຣໍາ ອາດສົງໄສວ່າ ລົດບັນທຸກຈາກຕ່າງປະເທດ ແອບແຝງດ້ວຍແຜນປອງຮ້າຍ.

- ຖືກໂທດຍ້ອນລັກຂາຍຂໍ້ມູນ

ມີຂ່າວຈາກສິງກະໂປ ໃນກາງເດືອນຕຸລາປີນີ້ ທີ່ບອກວ່າພະນັກງານຍິງຄົນໜຶ່ງສັນຊາດຈີນ ໄດ້ຖືກຂໍ້ຫາ 27 ກະໂທງ ຕາມກົດໝາຍທະນາຄານ ແລະ ກົດໝາຍຄອມພິວເຕີ ຍ້ອນວ່າຜູ້ກ່ຽວໄດ້ຂາຍຂໍ້ມູນສ່ວນບຸກຄົນຂອງລູກຄ້າຈໍານວນກວ່າ 1,000 ຄົນ ໃຫ້ພວກຕົ້ມຕຸ໋ນທາງອິນເຕີເນັດ, ພະນັກງານຍິງຄົນນີ້ເຮັດວຽກຢູ່ຂະແໜງທີ່ພົວພັນກັບອະສັງຫາລິມະຊັບກໍເລີຍຮູ້ຈັກລູກຄ້າລາຍໃຫຍ່ຫຼາຍຄົນ; ເມື່ອໄດ້ໂອກາດນາງກໍເລີຍປ້ອນລາຍຊື່, ອາຊີບ, ບ່ອນຢູ່, ເລກບັນຊີ ແລະ ອື່ນໆ ໃຫ້ພວກຕົ້ມຕຸ໋ນ ແຕ່ກໍບໍ່ລອດມືກົດໝາຍເຫັນບໍ່ລະ?.




*#ບ່າວກະບື*

ທີ່ຫ້ອງສານກ່ຽວກັບຄະດີຢ່າຮ້າງ, ຍິງຄົນໜຶ່ງຂໍຮ້ອງຕໍ່ຜູ້ພິພາກສາວ່າ: "ຄືຈັ່ງຊີ້ທ່ານ, ຂ້າພະເຈົ້າຕ້ອງການຢ່າຮ້າງກັບຜົວ."

"ເປັນຫຍັງຈຶ່ງຢາກຮ້າງ?" ຜູ້ພິພາກສາຖາມ.

**ນາງຕອບວ່າ:** "ເພາະວ່າເຂົາບໍ່ຊື່ສັດຕໍ່ຂ້າພະເຈົ້າ".

**ຜູ້ພິພາກສາຖາມ** "ຈັ່ງໃດເຈົ້າຈຶ່ງຮູ້?"

**ນາງຕອບວ່າ:** "ຢະເອີຍ! ຊິບໍ່ຮູ້ແນວໃດ, ລູກໆຫາຜູ້ຊິຄືລາວຜູ້ດຽວກໍບໍ່ມີ.

*# BAOKBU*

In a divorce court, a woman requested the judge Your Honour, I want to diborce my husband."

"But why?" asked the judge.

She replied, "Because he is mot faith-ful to me."

The judge asked "How do you know?"

She replied, "My lord, not a single child resembles him."

## ສຸນທອນພົດ...

(ຕໍ່ຈາກໜ້າ 8)

ເຮັດຫຼ້ອນພາລະກໍາປະຫວັດສາດອັນມີກຽດຂອງຕົນ ໃນຖານະເປັນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ແລະ ແຕ່ລະທ້ອງຖິ່ນ. ໃນສະເພາະໜ້ານີ້ ພວກເຮົາຈະໄດ້ພ້ອມກັນກະກຽມດໍາເນີນກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ ແລະ ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V.

ປະຕິບັດຕາມລັດຖະທໍາມະນູນ ແລະ ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ, ບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງຈໍານວນໜຶ່ງ ອາດຈະໄດ້ສືບຕໍ່ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາຊຸດໃໝ່, ຈໍານວນໜຶ່ງອາດຈະໄປຮັບໜ້າທີ່ວຽກງານໃນຂົງເຂດອື່ນແລະຈໍານວນໜຶ່ງອາດຈະໄດ້ພັກຜ່ອນບໍານານຕາມລະບຽບການ; ເຖິງຢ່າງໃດກໍຕາມ, ຂ້າພະເຈົ້າຫວັງວ່າ ທຸກໆທ່ານຈະຮັກສາ ແລະ ເສີມຂະຫຍາຍມູນເຊື້ອແຫ່ງນໍ້າໃຈປະຕິວັດ, ມູນເຊື້ອຮັກຊາດຂອງຕົນ ສືບຕໍ່ເປັນຄັນທຸງແກ່ການເຕົ້າໂຮມຄວາມສາມັກຄີພາຍໃນຊາດແລະລະຫວ່າງເຜົ່າຕ່າງໆ ສືບຕໍ່ພາລະບົດບາດປົກປັກຮັກສາ ແລະ ພັດທະນາປະເທດຊາດ ໄປຕາມຈຸດໝາຍທີ່ພັກເຮົາໄດ້ວາງໄວ້. ໃນສະເພາະໜ້າ ໃຫ້ເອົາໃຈໃສ່ເຂົ້າຮ່ວມການກະກຽມການເລືອກຕັ້ງສະມາຊິກສະພາແຫ່ງຊາດແລະສະມາຊິກສະພາປະຊາຊົນຂັ້ນແຂວງຊຸດໃໝ່ ໃຫ້ໄດ້ຮັບຜົນສໍາເລັດຕາມຈຸດປະສົງແລະລະດັບຄາດໝາຍທີ່ວາງໄວ້.

ຜົນສໍາເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງນີ້ແມ່ນໝາກຜົນລວມຍອດທາງສະຕິປັນຍາ, ສິດປະຊາທິປະໄຕ ກໍຄືຜົນຂອງການຍົກສູງຄວາມຮັບຜິດຊອບທາງການເມືອງຂອງບັນດາທ່ານສະມາຊິກສະພາແຫ່ງຊາດ, ການຕັດສິນໃຈສູງຂອງລັດຖະບານ, ອົງການລັດທີ່ກ່ຽວຂ້ອງ ທີ່ມີຄວາມພະຍາຍາມ ແລະ ມີມາດຕະການຕົວຈິງ ໃນການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໃຫ້ຕົກໄປເທື່ອລະກ້າວ ເພື່ອສ້າງຄວາມເຊື່ອໝັ້ນຂອງປະຊາຊົນ ຕໍ່ການນໍາພາຂອງພັກ, ລັດຖະບານໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ໃຫ້ມີຄວາມໜັກແໜ້ນຂຶ້ນເລື້ອຍໆ.

ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຮັບຜົນສໍາເລັດຢ່າງຈົບງາມ ກໍຍ້ອນມີການຊີ້ນໍາຢ່າງໃກ້ຊິດຈາກກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ, ຍ້ອນຄວາມຮັບຜິດຊອບສູງຂອງລັດຖະບານ, ບັນດາກະຊວງ, ອົງການກວດກາ ແລະ ກວດສອບ, ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ແລະ ຂະແໜງການກ່ຽວຂ້ອງທີ່ໃຫ້ການຮ່ວມມືແລະສະໜັບສະໜູນຢ່າງກວ້າງຂວາງ.

ຕາງໜ້າຄະນະປະຈໍາສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດຂໍສະແດງຄວາມຂອບໃຈເປັນຢ່າງສູງມາຍັງກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກທີ່ຍາມໃດກໍໄດ້ໃຫ້ການຊີ້ນໍາຢ່າງໃກ້ຊິດຕໍ່ສະພາແຫ່ງຊາດ ໂດຍຕະຫຼອດມາ, ຂໍສະແດງຄວາມຂອບໃຈເປັນຢ່າງສູງມາຍັງບັນດາການນໍາພັກ-ລັດ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວແລະອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມ.

ຂອບໃຈມາຍັງປະຊາຊົນລາວບັນດາເຜົ່າຢູ່ພາຍໃນ ແລະ ຊາວລາວທີ່ຢູ່ຕ່າງປະເທດ ທີ່ໄດ້ໃຫ້ຄວາມສົນໃຈ, ຕິດຕາມຢ່າງຈິດຈໍ່ການດໍາເນີນກອງປະຊຸມຂອງພວກເຮົາໃນຄັ້ງນີ້ ແລະ ສົ່ງຄໍາຄິດເຫັນຜ່ານໂທລະສັບສາຍດ່ວນມາຍັງກອງປະຊຸມເປັນຈໍານວນຫຼວງຫຼາຍ.

ຂໍສະແດງຄວາມຂອບໃຈຕໍ່ທຸກພາກສ່ວນກ່ຽວຂ້ອງທີ່ໄດ້ມີສ່ວນຮ່ວມເຂົ້າໃນຜົນສໍາເລັດຂອງກອງປະຊຸມຄັ້ງນີ້ ເປັນຕົ້ນ ກອງເລຂານຸການກອງປະຊຸມ ທີ່ເອົາໃຈໃສ່ຮັບຜິດຊອບເນື້ອໃນ, ວຽກບໍລິຫານ-ພິທີການຮອບດ້ານ.

ຂໍຂອບໃຈຕໍ່ກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທີ່ໄດ້ປະກອບສ່ວນເຮັດໃຫ້ກອງປະຊຸມມີຄວາມປອດໄພທຸກປະການ ແລະ ຂອບໃຈຕໍ່ບັນດາສື່ມວນຊົນ ທີ່ໄດ້ເອົາໃຈໃສ່ເຜີຍແຜ່ການດໍາເນີນກອງປະຊຸມສະພາແຫ່ງຊາດ ໃຫ້ສັງຄົມໄດ້ເຂົ້າເຖິງ ເຊິ່ງເປັນການເພີ່ມຄວາມເຂົ້າໃຈຢ່າງເລິກເຊິ່ງຕໍ່ທຸກບັນຫາທີ່ນໍາມາພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 10 ນີ້ ແລະ ຕິດຕາມຢ່າງຕໍ່ເນື່ອງ.

ກອງປະຊຸມສະເໜີໃຫ້ຄະນະປະຈໍາສະພາແຫ່ງຊາດ, ບັນດາກໍາມາທິການ, ຄະນະເລຂາທິການສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ, ລັດຖະບານ, ອົງການທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງໄດ້ຜັນຂະຫຍາຍມະຕິກອງປະຊຸມຄັ້ງນີ້ ເຂົ້າໃນການປະຕິບັດວຽກງານຂອງແຕ່ລະພາກສ່ວນ ໃຫ້ໄດ້ຮັບຜົນສໍາເລັດເປັນຢ່າງດີ.

ສຸດທ້າຍນີ້, ຂໍອວຍພອນໃຫ້ທ່ານເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ, ບັນດາທ່ານຜູ້ນໍາຂັ້ນສູງພັກ-ລັດ, ອະດີດຜູ້ນໍາພັກ-ລັດ, ສະມາຊິກສະພາແຫ່ງຊາດ ຕະຫຼອດຮອດພະນັກງານ, ທະຫານ-ຕໍາຫຼວດ ແລະ ປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ຈົ່ງມີສຸຂະພາບເຂັ້ມແຂງ, ມີຄວາມສຸກໃນຄອບຄົວແລະປະສົບຜົນສໍາເລັດໃນໜ້າທີ່ວຽກງານອັນມີກຽດຂອງຕົນ, ພ້ອມກັນເບີກບານຕ້ອນຮັບວັນສ້າງຕັ້ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ - ວັນຊາດທີ 2 ທັນວາ ຄົບຮອບ 50 ປີ ຢ່າງມີເນື້ອໃນ ແລະ ຄວາມໝາຍສໍາຄັນເລິກເຊິ່ງ.

ໃນໂອກາດອັນສະຫງ່າລາສີນີ້, ຂ້າພະເຈົ້າຂໍປະກາດປິດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງເປັນທາງການນັບແຕ່ເວລານີ້ເປັນຕົ້ນໄປ.

**ຜູ້ຊີ້ນໍາ**
ທ່ານ ສົງຄໍາ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ປອ. ພົດສະໄໝ ບຸນວິໄລ

**ຄະນະບັນນາທິການ**
ທ່ານ ສຸລະສັກ ສຸວັນນະວົງ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຂ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມົ່ງມຸງຄຸນ
ທ່ານ ນາງ ສຸພາວັນ ຫອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ